# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ກັນຍາ 2025
ປີທີ 14
ສະບັບທີ 1033
ລາຍສັບປະດາ


## ຮອງປະທານສະພາແຫ່ງຊາດ ຕ້ອນຮັບ ເອກອັກຄະລັດຖະທູດແຫ່ງ ສ.ເກົາຫຼີ ປະຈຳລາວ



(ສພຊ) - ວັນທີ 3 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າພົບປະຂອງທ່ານ ຈຸງ ຢຸງ ຊູ ເອກອັກຄະລັດຖະທູດແຫ່ງ ສ.ເກົາຫຼີ ປະຈຳ ສປປລາວ.

ໃນການພົບປະ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມດີໃຈທີ່ໄດ້ມີ

ອ່ານຕໍ່ໜ້າ 4





ລັດຖະທຳມະນູນ ເປັນກົດໝາຍພື້ນຖານແຫ່ງລັດ ທັນແນວທາງຂອງພັກເປັນອັນລະອຽດ. ລັດຖະທຳມະນູນຈະລະບຸໄວ້ເຊິ່ງຜົນງານອັນໃຫຍ່ຫຼວງຂອງການປະຕິວັດ ທີ່ປະຊາຊົນລາວບັນດາເຜົ່າຍາດມາໄດ້ໃນການຕໍ່ສູ້ຫຼາຍສິບປີທີ່ຜ່ານມາ; ກຳນົດສິດພື້ນຖານຂອງຊາດ, ທາດແທ້ຂອງລັດ, ແນວທາງສ້າງສາເສດຖະກິດ-ສັງຄົມໃນໄລຍະໃໝ່ຂອງການປະຕິວັດ, ສິດ ແລະ ພັນທະຂອງພົນລະເມືອງ, ກົງຈັກການຈັດຕັ້ງຂອງລັດ ແລະ ອື່ນໆ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 203)

ການສ້າງລັດຖະທຳມະນູນນັ້ນຕ້ອງມີແຜນການສ້າງ ແລະ ປັບປຸງເພີ່ມຕື່ມກົດໝາຍຕ່າງໆ ແລະ ບັນດາຂໍ້ກຳນົດຢູ່ໃຕ້ກົດໝາຍ ເພື່ອຈັດຕັ້ງຄຸ້ມຄອງການເຄື່ອນໄຫວດ້ານຕ່າງໆ ຂອງສັງຄົມ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 203)

ອ່ານຕໍ່ສະບັບໜ້າ

## ເລຂາຄະນະພັກນອສຳເລັດການເຄື່ອນໄຫວວຽກງານຢູ່ຮ່າໂນ້ຍ



(ສພຊ) - ໂດຍຕອບສະໜອງຕາມການເຊື້ອເຊີນຂອງສະຫາຍ ນາງ ບິ່ງ ທິ ທູ ຮວ່າຍ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ເລຂາຄະນະພັກນະຄອນຫຼວງຮ່າໂນ້ຍ ສສ.ຫວຽດນາມ, ສະຫາຍ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະ

ອ່ານຕໍ່ໜ້າ 6

## ປະທານສະມາຄົມມິດຕະພາບ ລາວ-ກູບາ ເຂົ້າຢ້ຽມຂ່ຳນັບປະທານປະເທດ ສ.ກູບາ



ອ່ານຕໍ່ໜ້າ 4

## ຮຽບຮຽງເນື້ອໃນປະຫວັດ 50ປີ ສະພາແຫ່ງຊາດ

(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນປະຫວັດ 50 ປີ ຂອງສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 3-7 ກັນຍານີ້ ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ມີທ່ານສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກ

ອ່ານຕໍ່ໜ້າ 12



## ຫາລືການແກ້ໄຂບັນຫາການແຕ່ງດອງກ່ອນໄວ ແລະ ການພັດທະນາໄວໜຸ່ມ





(ສພຊ) - ກອງປະຊຸມວ່າດ້ວຍການແກ້ໄຂບັນຫາການແຕ່ງດອງໃນໄວເດັກ ໄດ້ເປີດຢ່າງເປັນທາງການ ໂດຍມີທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ) ເປັນປະທານກອງປະຊຸມ ພ້ອມດ້ວຍຄຳກ່າວຕ້ອນຮັບຈາກທ່ານ ບີລານ ອໍຣັງ ເຊັບ ດູຣານີ (Bilal AurangZebDurrani) ຜູ້ຕາງໜ້າອົງການສະຫະປະຊາຊາດກອງທຶນສຳລັບເດັກ(UNICEF) ປະຈຳ ສປປລາວ, ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການຂອງ ສພຊ, ສະມາຊິກສະພາແຫ່ງຊາດ(ສສຊ) ທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ (ກວທສ), ຕາງໜ້າຈາກກະຊວງ-

ອ່ານຕໍ່ໜ້າ 8

## ທ່ານ ສົມມາດ ພົລເສນາ ພົບປະຜູ້ມີສິດເລືອກຕັ້ງຢູ່ແຂວງຈຳປາສັກ





ອ່ານຕໍ່ໜ້າ 4



ວິທີເລືອກກິນ...

(ໜ້າ 9)



ສີລັງກາ ຜ່ານກົດໝາຍ...

(ໜ້າ 10)





ຂ່າວທີ່ໜ້າສົນໃຈ...

(ໜ້າ 12)

# ຫາລືຄວາມພ້ອມຮ່າງກົດໝາຍ ທີ່ຈະກຳນົດໃນແຜນການສ້າງ ແລະ ປັບປຸງ



(ສພຊ) - ວັນທີ 2 ກັນຍານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບຄວາມກຽມພ້ອມຂອງຮ່າງກົດໝາຍທີ່ຈະກຳນົດໃນແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງ ສພຊ ຊຸດທີ X ແຕ່ປີ 2026-2030 ກ່ອນຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີX ໂດຍການເປັນປະທານຂອງທ່ານສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຄະນະກົມ ແລະ ແຂກຖືກເຊີນ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອທົບທວນ ແລະ ຖອດຖອນບົດຮຽນຄືນກ່ຽວກັບການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍຕະຫຼອດໄລຍະເວລາ 5 ປີຜ່ານມາ ທັງຊອກວິທີການແກ້ໄຂການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃຫ້ມີປະສິດທິຜົນ ໂດຍສະເພາະການສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະກະຊວງ, ອົງການ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ມີຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ; ທ່ານຍັງເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ແຕ່ງຕັ້ງຄະນະຮັບຜິດຊອບສ້າງແລະປັບປຸງກົດໝາຍ, ກະກຽມແຜນການເຄື່ອນໄຫວ ແລະ ແຜນງົບປະມານຮັບໃຊ້ໃຫ້ແກ່ການຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍແຕ່ລະສະບັບ ແນໃສ່ເຮັດໃຫ້ການສ້າງ ແລະ ປັບປຸງກົດໝາຍແຕ່ລະປີ ມີຜົນສຳເລັດຕາມແຜນການທີ່ວາງໄວ້.

ໃນກອງປະຊຸມໄດ້ຮັບຟັງຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດຊຸດທີX ແຕ່ປີ2026-2030; ຈາກນັ້ນ, ໄດ້ພ້ອມກັນປະກອບຄຳເຫັນ ແລະ ໃຫ້ຂໍ້ມູນຢ່າງລະອຽດຈະແຈ້ງ ໂດຍສະເພາະບັນດາກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

**(ນາງ ອາລິນ ສຸພົມມະປະດິດ)**



# ຊົ້ນຈງການເກັບບໍລິການບັດປະຈຳຕົວດິຈິຕອນ 30,000 ກີບ

(ສພຊ) - ການອອກບັດປະຈຳຕົວດິຈິຕອນໃຫ້ພົນລະເມືອງໃນໄລຍະຕົ້ນນີ້ ເຫັນວ່າໄດ້ຮັບການສະໜັບສະໜູນ, ຊ່ວຍເຫຼືອ ແລະ ໃຫ້ກຳລັງໃຈແກ່ເຈົ້າໜ້າທີ່ເປັນຢ່າງດີ, ພົນລະເມືອງລາວມີຄວາມຕື່ນຕົວ, ສະໝັກໃຈ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຕາມການແນະນຳຂອງເຈົ້າໜ້າທີ່ໃນການປະກອບເອກະສານ, ການສະໜອງຮ່ອງຮອຍນິຕິວິທະຍາແລະອື່ນໆ; ແຕ່ກໍມີພົນລະເມືອງຈຳນວນໜຶ່ງ ໄດ້ສວຍໃຊ້ຊ່ອງວ່າງຂອງພົນລະເມືອງຄົນອື່ນ ທີ່ຍັງບໍ່ຮູ້ສະຖານທີ່ບ່ອນອອກບັດ, ບໍ່ທັນຮູ້ລະບຽບການ ແລະ ອື່ນໆ ໄດ້ສວຍໂອກາດເກັບເງິນນຳພົນລະເມືອງຜູ້ທີ່ມາໃນມູນຄ່າ3-5 ແສນກີບຕໍ່ບັດ ເຊິ່ງເຫັນວ່າ ຜູ້ສວຍໂອກາດເກັບເງິນນີ້ ຂາດຈັນຍາບັນ, ຈັນຍາທຳ, ສ້າງຄວາມເສຍຫາຍໃຫ້ແກ່ເຈົ້າໜ້າທີ່ ເຮັດໃຫ້ຄົນບໍ່ດີສວຍໂອກາດປັ່ນປ່ວນພາຍໃນ ແລະ ຜິດຕໍ່ລະບຽບກົດໝາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ດ້ວຍເຫດຜົນດັ່ງກ່າວ ຈຶ່ງຂໍແຈ້ງມາຍັງພົນລະເມືອງຊາບທົ່ວເຖິງກັນວ່າ:

1. ການເກັບຄ່າບໍລິການເອກະສານໃນການອອກບັດປະຈຳຕົວດິຈິຕອນໃນປັດຈຸບັນ ແມ່ນປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 2086/ປກສ, ລົງວັນທີ 14 ສິງຫາ 2025 ວ່າດ້ວຍການເກັບຄ່າບໍລິການອອກບັດປະຈຳຕົວປະຊາຊົນລາວ ໃນໄລຍະຈັດຕັ້ງປະຕິບັດໂຄງການສ້າງຖານຂໍ້ມູນພົນລະເມືອງແລະບັດປະຈຳຕົວ;

2. ການເກັບຄ່າບໍລິການອອກບັດປະຈຳຕົວດິຈິຕອນ ໃນລາຄາ 30,000 ກີບຕໍ່ບັດ, ໃນລາຄານີ້ ແມ່ນລວມທັງການປະກອບເອກະສານ ແລະ ຄ່າບັດປະຈຳຕົວດິຈິຕອນ ເຊິ່ງຂໍ້ຕົກລົງດັ່ງກ່າວ ມີຜົນບັງຄັບໃຊ້ຮອດວັນທີ 31 ທັນວາ 2026;

3. ສ່ວນມີການກ່າວຫາເຈົ້າໜ້າທີ່ອອກບັດປະຈຳຕົວວ່າເກັບເງິນຄ່າບໍລິການເກີນກຳນົດໃນສື່ອອນລາຍຕ່າງໆນັ້ນ ແມ່ນບໍ່ມີມູນຄວາມຈິງ.

ພ້ອມນີ້, ຮຽກຮ້ອງມາຍັງພົນລະເມືອງລາວທຸກຄົນ, ຖ້າພົບເຫັນບຸກຄົນພາຍນອກທີ່ເຄື່ອນໄຫວເປັນນາຍໜ້າ ແລະ ມີການຮຽກຮ້ອງຄ່າບໍລິການອື່ນໆເພີ່ມຕື່ມ ໃຫ້ແຈ້ງຕໍ່ເຈົ້າໜ້າທີ່ອອກບັດປະຈຳຕົວບ່ອນຕົນຍື່ນເອກະສານ ຫຼື ແຈ້ງຕໍ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ.

ສາຍດ່ວນ 1529 ເພື່ອຮັບການຊີ້ແຈງຂໍ້ມູນເພີ່ມຕື່ມ.

**(ເພຈ: ຄວາມສະຫງົບ Lao Security News)**

# ກຳມາທິການກົດໝາຍ ຕິດຕາມກວດກາ ການປະຕິບັດກົດໝາຍຢູ່ບໍ່ແກ້ວ ແລະ ຫຼວງນ້ຳທາ




(ສພຂ) - ວັນທີ 3 ກັນຍາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ໄດ້ເປີດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ໂດຍການເປັນປະທານຮ່ວມຂອງທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການກົດໝາຍ ແລະທ່ານ ຈອມສີ ລັດຕະນະປັນ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 5, ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານດຣ. ຄຳພະຫຍາ ພົມປັນຍາ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງຜູ້ຊີ້ນຳຂົງເຂດຍຸຕິທຳ, ບັນດາທ່ານກຳມະການໃນ ຄປຈ ແລະ ຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ, ສອງກອງບັນຊາການ ປກຊ-ປກສ ແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງພ້ອມດ້ວຍຄະນະທີ່ມາຈາກສພຊແລະຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນ ສພຊ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານສະພາບລວມການຈັດຕັ້ງປະຕິບັດກົດໝາຍຢູ່ແຂວງບໍ່ແກ້ວ ຈາກທ່ານ ສາຍຄຳ ຄຳປະເສີດ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ການລາຍງານຈາກຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ ຕາມການເຈາະຈີ້ມເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສ້າງນິຕິກຳ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ; ທ່ານ ດຣ. ຄຳພະຫຍາ ພົມປັນຍາ ຍັງໄດ້ມີຄຳເຫັນເພີ່ມຕື່ມຕໍ່ກັບການຈັດຕັ້ງປະຕິບັດ 4 ກົດໝາຍດັ່ງກ່າວ. ຈາກນັ້ນ, ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນແນະນຳໃນການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ການສ້າງນິຕິກຳຕ່າງໆ ໃຫ້ຮັດກຸມ ແລະ ແທດເໝາະກັບວຽກງານຕົວຈິງຢູ່ທ້ອງຖິ່ນ.

ທີມງານຈາກສພຊແລະ ສພຂ ໄດ້ສືບຕໍ່ລົງເຄື່ອນໄຫວເຮັດວຽກຮ່ວມກັບ ປກສ ເຂດເສດຖະກິດສາມ ຫຼ່ຽມຄຳ ທີ່ດ່ານພາສີສາກົນສາມຫຼ່ຽມຄຳເມືອງຕົ້ນເຜີ້ງ ເຊິ່ງໄດ້ຮັບຟັງການລາຍງານຈາກຫົວໜ້າ ປກສ ເຂດດັ່ງກ່າວ ກ່ຽວກັບສະພາບການຈັດຕັ້ງປະຕິບັດກົດໝາຍພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ ສະພາບບັນຫາທີ່ເກີດຂຶ້ນຢູ່ພາຍໃນເຂດ ເປັນຕົ້ນ: ສິ່ງເສບຕິດ, ການແກ້ໄຂການສໍ້ໂກງ ຫຼື ກຸ່ມແກ້ງຄອນເຊັນເຕີ, ແຮງງານຕ່າງຊາດທີ່ມາອອກແຮງງານແບບຜິດກົດໝາຍ, ບາງບໍລິສັດທີ່ຄ້າງຈ່າຍເງິນເດືອນໃຫ້ພະນັກງານ; ນອກນັ້ນ, ຍັງໄດ້ຮັບຟັງການລາຍງານກ່ຽວກັບບັນຫາການຄຸ້ມຄອງຜູ້ຖືກຫາ ແລະ ນັກໂທດທີ່ມີຄວາມຫຍຸ້ງຍາກເປັນຕົ້ນແມ່ນການສະໜອງສະບຽງອາຫານບໍ່ພຽງພໍ ແລະ ບໍ່ທັນໄດ້ຮັບອັດຕາຂອງນັກໂທດ. ຈາກນັ້ນ, ຄະນະໄດ້ລົງໄປຢ້ຽມຢາມຄ້າຍຄຸມຂັງ-ດັດສ້າງໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ເຊິ່ງປັດຈຸບັນມີຜູ້ຖືກຫາ ແລະ ນັກໂທດ ຈຳນວນ 243 ຄົນ, ຍິງ 8 ຄົນ ໃນນັ້ນ, ມີທັງນັກໂທດສັນຊາດລາວແລະສັນຊາດອື່ນ.

ວັນທີ5 ກັນຍາ, ປະທານກຳມາທິການກົດໝາຍ ແລະຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງຫຼວງນ້ຳທາ ເຊິ່ງໄດ້ເຂົ້າພົບທ່ານ ວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຫຼວງນ້ຳທາ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວຄັ້ງນີ້; ຈາກນັ້ນ, ໄດ້ເປີດກອງປະຊຸມຕິດຕາມກວດກາການປະຕິບັດກົດໝາຍປະຈຳປີ 2025 ຂອງກຳມາທິການກົດໝາຍ ໂດຍການເປັນປະທານຮ່ວມຂອງທ່ານ ຄຳແພງ ວິລະພັນ ແລະ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ), ມີບັນດາທ່ານຄະນະປະຈຳ ແລະ ພະນັກງານ ສພຂ, ພະແນກການທີ່ກ່ຽວຂ້ອງ ລວມຜູ້ເຂົ້າຮ່ວມ 34 ທ່ານ, ຍິງ 6 ທ່ານ.

ໃນກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການທີ່ກ່ຽວຂ້ອງໃນໄລຍະຜ່ານມາ; ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ກົດໝາຍວ່າດ້ວຍການຂົນ ສົ່ງທາງບົກ ເປັນຕົ້ນແມ່ນຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ທິດທາງ ແລະ ມາດຕະການໃນຕໍ່ໜ້າ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນສົນທະນາ, ປະກອບຄຳເຫັນ ແລະແລກປ່ຽນບົດຮຽນເຊິ່ງກັນແລະກັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍມີຄຸນນະພາບ ແລະ ມີຄວາມເຂັ້ມງວດຂຶ້ນກວ່າເກົ່າ.

**(ດວງຈັນ ທ່ຽງທຳ ແລະ ນາງ ອຳພອນ ສີປະເສີດ)**



# ປະທານກຳມາທິການການຕ່າງປະເທດ ຕ້ອນຮັບ 2 ເອກອັກຄະລັດຖະທູດ ເຂົ້າຢ້ຽມຂໍ່ານັບ



(ສພຊ) - ວັນທີ 4 ກັນຍາຜ່ານມາ, ທ່ານ ສັນຍາ ປຣະເສີດປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນ ຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ອີລີສະເບດ ຕັນເຕ ເອກອັກຄະລັດຖະທູດ ແຫ່ງ ສາທາລະນະລັດຟີລິບປິນ ປະຈຳ ສປປລາວ ໃນໂອກາດທີ່ມາດຳລົງຕຳແໜ່ງໃໝ່; ຈຸດປະສົງຂອງການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄັ້ງນີ້ ກໍເພື່ອເສີມຂະຫຍາຍສາຍພົວພັນຮ່ວມມືທີ່ດີລະຫວ່າງສປປລາວ ແລະສ.ຟີລິບປິນເວົ້າລວມ,ເວົ້າສະເພາະກໍຄືການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ; ພ້ອມກັນນີ້, ກໍເປັນການສະເຫຼີມສະຫຼອງເນື່ອງໃນໂອກາດວັນສ້າງຕັ້ງສາຍພົວພັນການທູດລະຫວ່າງ ສປປລາວ ແລະ ສ.ຟີລິບປິນ ຄົບຮອບ 70 ປີ(14/1/1955-14/1/2025).

ໂອກາດດັ່ງກ່າວ, ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ພ້ອມທັງຊົມເຊີຍທ່ານ ນາງ ອີລີສະເບດ ຕັນເຕ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງແໜ່ງເປັນເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດຟີລິບປິນປະຈຳສປປລາວ;ພ້ອມກັນນີ້, ຍັງໄດ້ແຈ້ງສະພາບການພາຍໃນ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດທັງຕີລາຄາສູງຕໍ່ສາຍພົວພັນ ມິດຕະພາບ ແລະການຮ່ວມມືລະຫວ່າງສອງປະເທດກໍຄືສອງອົງການນິຕິບັນຍັດ ລາວ-ຟີລິບປິນ ທີ່ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເປັນກ້າວໆ. ໃນປີ 2026 ລັດຖະສະພາຟີລິບປິນ ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ(AIPA) ຄັ້ງທີ 47, ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດລາວ ຈະໄດ້ມີໂອກາດປະສານງານແລະເຮັດວຽກຮ່ວມກັບສະຖານທູດຟີລິບປິນ ປະຈຳ ສປປລາວ, ເປັນຂົວຕໍ່ແຫ່ງການພົວພັນຮ່ວມມືລະຫວ່າງສອງປະເທດ.

ໃນຂະນະດຽວກັນ, ທ່ານ ເອກອັກຄະລັດຖະທູດ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ປະທານກຳມາທິການການຕ່າງປະເທດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນແລະແຈ້ງສະພາບການເລືອກຕັ້ງສະມາຊິກສະພາສູງ ຊຸດທີ 20 ໃຫ້ຊາບ; ພ້ອມທັງໃຫ້ຄຳໝັ້ນສັນຍາຈະສືບຕໍ່ເປັນໃຈກາງໃນການສານຕໍ່ມິດຕະພາບ ແລະ ການພົວພັນຮ່ວມມືລະຫວ່າງສອງປະເທດໃນດ້ານຕ່າງໆລວມເຖິງການຊຸກຍູ້ສົ່ງເສີມການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນໃນຕໍ່ໜ້າ.

ວັນຕໍ່ມາ, ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງທ່ານ ຊຸເດສ ມາເນຍ ເອກອັກຄະລັດຖະທູດແຫ່ງສາທາລະນະລັດສິງກະໂປ ປະຈຳ ສປປລາວ ໃນໂອກາດທີ່ຈະສຳເລັດການປະຕິບັດໜ້າທີ່ການທູດ ໃນວັນທີ 18 ຕຸລາທີ່ຈະມາເຖິງ; ການພົບປະຄັ້ງນີ້, ບໍ່ພຽງແຕ່ເປັນການອຳລາເທົ່ານັ້ນ, ຫາກຍັງເປັນພາກປະຕິບັດທາງພິທີການທູດ ທັງເປັນການສືບຕໍ່ຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີລະຫວ່າງ ສປປລາວ - ສ.ສິງກະໂປ ເວົ້າລວມ, ເວົ້າສະເພາະກໍຄືລະຫວ່າງສອງອົງການນິຕິບັນຍັດ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອສົ່ງເສີມສັນຕິພາບ, ສະຖຽນລະພາບ, ເອກະລາດ ໃນພາກພື້ນ ແລະ ໃນໂລກ ໃຫ້ນັບມື້ນັບຍືນຍົງ.

ໂອກາດດັ່ງກ່າວ, ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຊົມເຊີຍ ແລະຕີລາຄາສູງຕໍ່ທ່ານ ຊຸເດສ ມາເນຍ ທີ່ໄດ້ສຳເລັດການປະຕິບັດໜ້າທີ່ການທູດຢູ່ ສປປລາວ ພ້ອມກັບສະແດງຄວາມຂອບໃຈເປັນຢ່າງຍິ່ງທີ່ໄດ້ສະໜັບສະໜູນການພົວພັນຮ່ວມມື ແລະ ໃຫ້ການຊ່ວຍເຫຼືອແກ່ ສປປລາວ ຕະຫຼອດມາ ເປັນຕົ້ນການຈັດຝຶກອົບຮົມສຳມະນາໃຫ້ແກ່ພະນັກງານ, ເຝິກອົບຮົມສີມືແຮງງານ, ການເຝິກອົບຮົມທັກສະດ້ານພາສາຕ່າງປະເທດໃຫ້ແກ່ບັນດາກະຊວງ, ອົງການຕ່າງໆກໍຄືສະພາແຫ່ງຊາດລາວ, ຊ່ວຍເຫຼືອໄພພິບັດເຂື່ອນແຕກ, ໂຄວິດ-19 ແລະ ອື່ນໆ; ພ້ອມກັນນີ້, ປະທານກຳມາທິການການຕ່າງປະເທດຍັງໄດ້ແຈ້ງສະພາບການເຄື່ອນໄຫວຂອງສະພາແຫ່ງຊາດໂດຍສັງເຂບແລະທິດທາງແຜນການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ-ສິງກະໂປ ໃນຕໍ່ໜ້າ ໃຫ້ທ່ານທູດໄດ້ຮັບຊາບ.

ໃນຂະນະດຽວກັນ, ທ່ານ ເອກອັກຄະລັດຖະທູດສິງກະໂປ ປະຈຳ ສປປລາວ ກໍໄດ້ກ່າວສະແດງຄວາມຂອບ ໃຈຕໍ່ປະທານກຳມາທິການການຕ່າງປະເທດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງສະພາບການຕະຫຼອດໄລຍະການປະຕິບັດໜ້າທີ່ຂອງຕົນຢູ່ ສປປລາວ ໃຫ້ຊາບ ພ້ອມທັງໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ຊຸກຍູ້ການພົວພັນຮ່ວມມືລະຫວ່າງສອງປະເທດກໍຄືສອງສະພາແຫ່ງຊາດ ສິງກະໂປ-ລາວ ໃນດ້ານຕ່າງໆ ລວມເຖິງການຊຸກຍູ້ສົ່ງເສີມການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນໃນຕໍ່ໜ້າ ແລະ ຫວັງວ່າ ຈະໄດ້ຕ້ອນຮັບຄະນະຜູ້ແທນ ສປປລາວ ໃນໂອກາດທີ່ເດີນທາງເຂົ້າຮ່ວມກອງປະຊຸມໄອປາ ຄັ້ງທີ 48 ທີ່ ສ.ສິງກະໂປ ຈະເປັນເຈົ້າພາບໃນປີ 2027.



# ກອງປະຊຸມປະຈຳປີຂອງ AFPPD ທີ່ມະນິລາ




(ສພຊ) - ວັນທີ 3-5 ກັນຍາຜ່ານມາ, ທ່ານ ປອ. ກໍລະກັນ ພົມມະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ, ກຳມະການປະຈຳກຳມາທິການວັດທະນະທຳ-ສັງຄົມ ທັງເປັນຄະນະບໍລິຫານງານຂອງອົງການລັດຖະສະພາອາຊີ ກ່ຽວກັບປະຊາກອນ ແລະການພັດທະນາ(AFPPD) ແລະ ຄະນະ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ 2025 ຂອງອົງການ AFPPD ທີ່ນະຄອນຫຼວງມະນິລາ,ປະເທດຟີລິບປິນ. ກອງປະຊຸມດັ່ງກ່າວ ໄດ້ໄຂຂຶ້ນພາຍໃຕ້ການເປັນປະທານຂອງທ່ານ ນາງ ໂຢໂກະຄາມິກາວາປະທານ ອົງການ AFPPD ໂດຍການເຂົ້າຮ່ວມ ແລະ ກ່າວຕ້ອນຮັບຂອງທ່ານ ຊີໂລ ຄຣີເຊວ ລາກແມນ ສະມາຊິກລັດຖະສະພາຟີລິບປິນ ທັງເປັນຄະນະບໍລິຫານງານຄະນະກຳມະການນິຕິບັນຍັດຟີລິບປິນ ກ່ຽວກັບປະຊາກອນ ແລະການພັດທະນາ(PLCPD) ແລະ ອົງການ AFPPD; ພ້ອມກັນນີ້ ຍັງໄດ້ຮັບຟັງຄຳເຫັນຈາກທ່ານຜູ້ອຳນວຍການອົງການ UNFPA ປະຈຳພາກພື້ນອາຊີ-ປາຊີຟິກ, ຜູ້ຈັດການອົງການ FP2030 ປະຈຳພາກພື້ນອາຊີ-ປາຊີຟິກ, ຜູ້ຕາງໜ້າສຽງສ່ວນໜ້ອຍຂອງສະພາຜູ້ແທນປະຊາຊົນຟີລິບປິນແລະສະມາຊິກລັດຖະສະພາຟີລິບປິນ ທັງເປັນປະທານອົງການ PLCPD.

ກອງປະຊຸມຄັ້ງນີ້ປະກອບມີ 6 ວາລະ ທີ່ໄດ້ນຳສະເໜີບັນດາເນື້ອໃນ ແລະ ແລກປ່ຽນບົດຮຽນທີ່ສຳຄັນດັ່ງນີ້: (ວາລະທີ 1) ການຢຸດຕິອຸປະສັກໃນການສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ ເຊິ່ງມີການນຳສະເໜີ 4 ບົດຮຽນຄື: 1. ບຸກທະລຸບັນດາສິ່ງກີດຂວາງ, ການປ່ຽນແປງບັນດາມາດຕະການສັງຄົມໂດຍຜ່ານກົດໝາຍ; 2. ຜົນກະທົບຂອງເຕັກໂນໂລຊີ ແລະ ສື່ສັງຄົມອອນລາຍ ຕໍ່ກັບແມ່ຍິງ ແລະ ເດັກຍິງ (ກໍລະນີສຶກສາຂອງປະເທດນູແວນເຊລັງ); 3. ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ໂດຍຜ່ານຄວາມອິດສະຫຼະດ້ານການຈະເລີນພັນ; 4. ແມ່ຍິງ, ສັນຕິພາບ ແລະ ຄວາມປອດໄພ. (ວາລະທີ 2) ການເອົາໄວໜຸ່ມເປັນໃຈກາງ: ນະໂຍບາຍເພື່ອອະນາຄົດທີ່ຍືນຍົງ ໃນວາລະດັ່ງກ່າວນີ້, ທ່ານ ປອ. ກໍລະກັນ ພົມມະວົງ ໄດ້ເປັນປະທານກອງປະຊຸມ ເຊິ່ງໄດ້ຮັບຟັງການນຳສະເໜີ4ບົດຮຽນຄື: 1.ການເພີ່ມຜົນຕອບແທນທາງດ້ານປະຊາກອນໃຫ້ສູງສຸດ: ການກຽມກຳລັງແຮງງານໃຫ້ພ້ອມສຳລັບອະນາຄົດ (ກໍລະນີສຶກສາຂອງປະເທດກຳປູເຈຍ); 2. ການສົ່ງເສີມການນຳໃຊ້ສື່ດີຈິຕອນແລະນະໂຍບາຍສຳລັບການສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ(ກໍລະນີສຶກສາຂອງປະເທດອິນເດຍ); 3.ບົດບາດຂອງໄວໜຸ່ມໃນການສົ່ງເສີມວຽກງານເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs); 4. ການຈັດຕັ້ງປະຕິບັດນະໂຍບາຍເພື່ອສ້າງຄວາມເຂັ້ມແຂງໃຫ້ໄວໜຸ່ມ(ກໍລະນີສຶກສາຂອງປະເທດອຸດສະເບກິດສະຖານ). (ວາລະທີ 3) ການສົ່ງເສີມຜູ້ອາຍຸສູງ ໃຫ້ມີສຸຂະພາບດີ ແລະ ແຂງແຮງ ໃນພາກພື້ນອາຊີ-ປາຊີຟິກເຊິ່ງມີ3 ບົດນຳສະເໜີຄື: 1. ການປະຕິບັດງານທີ່ດີທີ່ສຸດໃນການສົ່ງເສີມຜູ້ອາຍຸສູງຢ່າງຫ້າວຫັນໃນທົ່ວພາກພື້ນປາຊີຟິກ (ກໍລະນີສຶກສາຂອງປະເທດອົດສະຕຣາລີ; 2. ການແກ້ໄຂບັນຫາສຸຂະພາບຈິດ ແລະຄວາມໂດດດ່ຽວທາງດ້ານສັງຄົມ ໃນບັນດາປະຊາກອນຜູ້ອາຍຸສູງ;3.ນະໂຍບາຍຂອງເກົາຫຼີເພື່ອສັງຄົມຜູ້ອາຍຸສູງທີ່ມີສຸຂະພາບດີ ແລະ ແຂງແຮງ (ກໍລະນີສຶກສາຂອງສາທາລະນະລັດເກົາຫຼີ). (ວາລະທີ 4) ເຄືອຂ່າຍສະມາຊິກລັດຖະສະພາເພື່ອປຶກສາຫາລືກ່ຽວກັບການພັດທະນາແບບຍືນຍົງ ວາລະ 2030 ເຊິ່ງມີ 3 ບົດນຳສະເໜີຄື: 1. ວຽກງານຂອງສູນລັດຖະສະພາອາຊີ (PCAsia);2.ການເຄື່ອນໄຫວວຽກງານຂອງສະມາຊິກລັດຖະສະພາອາຣັບກ່ຽວກັບປະຊາກອນ ແລະການພັດທະນາ (FAPPD); 3. ການເຄື່ອນໄຫວວຽກງານຂອງສະມາຊິກລັດຖະສະພາອາຟຣິກາກ່ຽວກັບປະຊາກອນແລະການພັດທະນາ(APFPD/FPA). (ວາລະທີ 5) ການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນກະທົບໃນການຈັດຕັ້ງປະຕິບັດວາລະ 2030 ເຊິ່ງມີ 3 ບົດນຳສະເໜີຄື: 1. ຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ການຈັດຕັ້ງປະຕິບັດ SDGs (ກໍລະນີສຶກສາຂອງປະເທດ ຕີມໍ ແລັດສະເຕ); 2. ຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ກັບໄວໜຸ່ມມານດີວ(ກໍລະນີສຶກສາຂອງປະເທດມານດີວ); 3. ແນວທາງໃນການຈັດຕັ້ງປະຕິບັດດ້ານຄວາມຍຸຕິທຳດ້ານສະພາບອາກາດ (ກໍລະນີສຶກສາຂອງປະເທດຟີລິບປິນ). (ວາລະທີ 6) ລາຍການສົນທະນາ: ຍຶດໝັ້ນພັນທະສັນຍາທົ່ວໂລກ - ຄວາມຄືບໜ້າໃນການຊຸກຍູ້ແຜນງານ ICPD ແລະ SDGs.

ນອກຈາກນີ້, ຍັງມີກອງປະຊຸມຄະນະບໍລິຫານງານອົງການ AFPPD ເພື່ອພິຈາລະນາບັນຫາຈຳນວນໜຶ່ງ; ກອງປະຊຸມກອງເລຂາອົງການ AFPPD ຮ່ວມກັບກອງເລຂາຂອງບັນດາປະເທດສະມາຊິກ; ພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງອົງການ AFPPD ກັບ 3 ອົງການ ເພື່ອຮ່ວມງານກັນໃນຕໍ່ໜ້າ ຄື: ອົງການ Pathfinder, FP2030 ແລະ PCAsia; ວາລະຄຳໝາຍໝັ້ນໃນການລົງມືຈັດຕັ້ງປະຕິບັດ. ທ່ານ ນາງ ໂທໂມໂກະ ຟູກຸດະ ຜູ້ອຳນວຍການປະຈຳພາກພື້ນອາຊີຕາເວັນອອກ, ອາຊີຕາເວັນອອກສ່ຽງໃຕ້ ແລະ ໂອເຊອານີ ໄດ້ກ່າວປິດກອງປະຊຸມ (ອອນລາຍ).

ໃນວັນສຸດທ້າຍ, ຄະນະຜູ້ແທນກອງປະຊຸມ ໄດ້ໄປທັດສະນະສຶກສາຢູ່ຫ້ອງການMeta ໃນເຂດພັດທະນາແຫ່ງໃໝ່ຂອງປະເທດຟີລິບປິນ ເພື່ອຮັບຟັງກ່ຽວກັບຜົນກະທົບທາງໄຊເບີ ແລະ ສື່ສັງຄົມອອນລາຍ ຕໍ່ປະຊາກອນ ໂດຍສະເພາະແມ່ນໄວໜຸ່ມ, ເຍົາວະຊົນ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

ໂອກາດພົບປະກັບທ່ານເອກອັກຄະລັດຖະທູດແຫ່ງ ສ.ເກົາຫຼີປະຈຳ ສປປລາວ ແລະ ໄດ້ຕີລາຄາສູງຕໍ່ການພົວພັນລະຫວ່າງ 2 ປະເທດ ກໍຄືລະຫວ່າງ 2 ອົງການນິຕິບັນຍັດ. ທ່ານເອກອັກຄະລັດຖະທູດແຫ່ງ ສ.ເກົາຫຼີ ໄດ້ມີຄວາມສົນໃຈກ່ຽວກັບການປັບປຸງລັດຖະທຳມະນູນ ສະບັບປີ 2025 ຂອງສະພາແຫ່ງຊາດລາວ ເຊິ່ງທ່ານຮອງປະທານສະພາແຫ່ງຊາດ ກໍໄດ້ແຈ້ງກ່ຽວກັບເຫດຜົນແລະຄວາມຈຳເປັນໃນການປັບປຸງລັດຖະທຳມະນູນ ລວມທັງການປັບປຸງບັນດາເນື້ອໃນຕົ້ນຕໍຂອງລັດຖະທຳມະນູນສະບັບດັ່ງກ່າວ ແລະ ໄດ້ມີການສົນທະນາຮ່ວມກັນຢ່າງກົງໄປກົງມາ; ນອກນັ້ນ, ເອກອັກຄະລັດຖະທູດ ຍັງໄດ້ແຈ້ງກ່ຽວກັບນະໂຍບາຍການຕ່າງປະເທດຂອງລັດຖະບານໃໝ່ ສ.ເກົາຫຼີ ໃຫ້ຝ່າຍລາວຊາບ.

**(ນາງ ອາລິນ ສຸພົມມະປະກິດ)**

# ທຫລ ມອບຄອມພິວເຕີໃຫ້ ສພຊ




(ສພຊ) - ຕອນສວາຍ ວັນອັງຄານທີ 2 ກັນຍານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບຄອມພິວເຕີຕັ້ງໂຕະ 1 ໜ່ວຍ ຈາກຊາວໜຸ່ມຮາກຖານທະນາຄານສົ່ງເສີມກະສິກຳແລະຄອມພິວເຕີຕັ້ງຕັກ 4 ໜ່ວຍ ຈາກທະນາຄານແຫ່ງ ສປປລາວ (ທຫລ) ລວມມູນຄ່າທັງໝົດ 42,715,000ກີບເພື່ອປະກອບສ່ວນເຂົ້າໃນວຽກງານກະກຽມດຳເນີນການເລືອກຕັ້ງ ສພຊ ຊຸດທີ X, ຕາງໜ້າມອບໂດຍທ່ານ ສຸລິສັກ ທຳນຸວົງ ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ ແລະ ຕາງໜ້າຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ປອ. ອາຄົມ ປຣະເສີດ ໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ໃຫ້ ທຫລ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.

**(ສອນສັກ ວັນວິໄຊ)**

## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 7 ກັນຍາຜ່ານມາ, ສະຫາຍ ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ມີເກນ ດີເອັດຊ໌-ກາແນນ ເບີຣມູເດັດຊ໌ ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງ ສາທາລະນະລັດກູບາ ໃນໂອກາດເດີນທາງມາຢ້ຽມຢາມລັດຖະກິດ ຢູ່ ສປປລາວ ລະຫວ່າງວັນທີ 6-7 ກັນຍາ 2025 ເພື່ອເພີ່ມທະວີ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອລະຫວ່າງສອງປະເທດລາວ-ກູບາ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ.

ໂອກາດນີ້, ສະຫາຍ ຈະເລີນ ເຢຍປາວເຮີ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປລາວ ຂອງສະຫາຍ ມີເກນ ດີເອັດຊ໌-ກາແນນ ເບີຣມູເດັດຊ໌ ພ້ອມດ້ວຍຄະນະ ເຊິ່ງເປັນການປະກອບສ່ວນອັນສຳຄັນທີ່ສຸດໃນການເສີມຂະຫຍາຍຮັດແໜ້ນສາຍພົວພັນມິດຕະພາບອັນເປັນມູນເຊື້ອຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ນັບມື້ຂະຫຍາຍຕົວ ແລະກ້າວເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ ພ້ອມທັງຕີລາຄາສູງຕໍ່ການນຳພາຂອງພັກກອມມູນິດກູບາ ໃນການນຳພາປະຊາຊົນປົກປັກຮັກສາ ແລະ ເສີມຂະຫຍາຍໝາກຜົນຂອງການປະຕິວັດກູບາ ແລະ ນຳພາສ້າງສາພັດທະນາປະເທດຢ່າງຕໍ່ເນື່ອງ; ປະຊາຊົນລາວ ມີຄວາມປິຕິຍິນດີ ແລະ ພາກພູມໃຈ ທີ່ເຫັນສາຍພົວພັນຮ່ວມມື ລາວ-ກູບາ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ, ສະແດງອອກໃນການແລກປ່ຽນ ຢ້ຽມຢາມການນຳຂັ້ນສູງຂອງສອງປະເທດ ເຖິງແມ່ນວ່າຈະຢູ່ຫ່າງໄກກັນຄືນລະທະວີບກໍຕາມ ແຕ່ຍັງໄປມາຫາສູ່ກັນປົກກະຕິ, ສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນເປັນມູນເຊື້ອຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ນັບມື້ໄດ້ຮັບການເສີມຂະຫຍາຍໃຫ້ເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ. ພ້ອມກັນນີ້, ສະຫາຍ ຈະເລີນ ເຢຍປາວເຮີ ຍັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ຕໍ່ພັກ, ລັດ ແລະ ປະຊາຊົນກູບາ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ ແລະ ຈິງໃຈ ຕໍ່ພັກ, ລັດ ແລະ ປະຊາຊົນລາວ ໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືໄລຍະປົກປັກຮັກສາປະເທດຊາດໃນປັດຈຸບັນພ້ອມທັງລາຍງານການພົວພັນຮ່ວມມືລະຫວ່າງສະມາຄົມມິດຕະພາບ ລາວ-ກູບາ, ກູບາ-ລາວແລະການເຄື່ອນໄຫວຂອງສະມາຄົມໃນໄລຍະຜ່ານມາໂດຍຫຍໍ້ ໃຫ້ປະທານປະເທດກູບາ ຮັບຊາບ.

ສະຫາຍ ມີເກນດີເອັດຊ໌-ກາແນນ ເບີຣມູເດັດຊ໌ ໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ສະຫາຍ ຈະເລີນ ເຢຍປາວເຮີ ທີ່ໄດ້ນຳພາຄະນະ ເຂົ້າຢ້ຽມຂ່ຳນັບໃນຄັ້ງນີ້ ພ້ອມທັງຕີລາຄາສູງຕໍ່ການຮ່ວມມືຮອບດ້ານລະຫວ່າງ ສ.ກູບາ ແລະ ສປປລາວ ໂດຍສະເພາະການພົວພັນຮ່ວມມືລະຫວ່າງສະມາຄົມມິດຕະພາບ ກູບາ-ລາວ, ລາວ-ກູບາ ໃນໄລຍະຜ່ານມາ ເຊິ່ງມີຜົນສຳເລັດໃນຫຼາຍດ້ານ; ສອງສະມາຄົມໄດ້ມີກົນໄກການປະສານງານ, ພົບປະແລກປ່ຽນ, ໄປມາຫາສູ່, ມີການປະສານສົມທົບ ແລະຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີພາກພື້ນ ແລະ ສາກົນ.

**(ຂ່າວ: ທະນູທອງ, ພາບ: ອ່າຍຄຳ)**



## ທ່ານ ສິມມາດ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 3-4 ກັນຍາຜ່ານມາ, ທ່ານ ສິມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ), ທ່ານ ປອ. ສົມໄຊ ສີຫາຈັກ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15, ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທ່ານ ດຣ. ນາງ ພົງພັນ ວິລະພັນ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງນະຄອນປາກເຊ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງນະຄອນປາກເຊແລະຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະຢ້ຽມພະນັກງານ-ລັດຖະກອນໂຮງໝໍແຂວງ, ລັດວິສາຫະກິດໄຟຟ້າລາວ ສາຂາແຂວງ ແລະ 6 ພາກສ່ວນໃນຂົງເຂດຕຸລາການຂອງແຂວງຈຳປາສັກຄື: ພະແນກຍຸຕິທຳ, ສານປະຊາຊົນ, ສານປະຊາຊົນພາກໃຕ້, ອົງການໄອຍະການປະຊາຊົນ, ອົງການໄອຍະການປະຊາຊົນພາກໃຕ້, ກອງປະຕິບັດຄຳຕັດສິນຂອງສານ.

ໃນການພົບປະ, ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບລວມການຈັດຕັ້ງປະຕິບັດວຽກງານຕາມ 5 ໜ້າທີ່ຕົ້ນຕໍ ຈາກທ່ານ ດຣ. ຄິດສະແຫວງ ສີສຸລາດ ຮອງຜູ້ອຳນວຍການໂຮງໝໍແຂວງ ເຊິ່ງເຫັນໄດ້ຜົນສຳເລັດທີ່ພົ້ນເດັ່ນແລະບາງບັນຫາຂໍ້ຫຍຸ້ງຍາກທີ່ຈະຕ້ອງສືບຕໍ່ປະຕິບັດໃຫ້ມີຜົນສຳເລັດ, ການຈັດຕັ້ງປະຕິບັດວຽກງານໃນໄລຍະ 7 ເດືອນປີ 2025 ຂອງລັດວິສາຫະກິດໄຟຟ້າລາວ ສາຂາແຂວງ ຈາກທ່ານ ພາສາພອນ ບຸບຜາຖາ ຮັກສາການຫົວໜ້າລັດວິສາຫະກິດດັ່ງກ່າວ ທີ່ຍົກໃຫ້ເຫັນຜົນສຳເລັດ ໂດຍສະເພາະຜົນຂອງການຈັດຕັ້ງປະຕິບັດ 7 ຕົວຊີ້ວັດ ແລະ ຍົກໃຫ້ເຫັນບັນຫາພົ້ນເດັ່ນຈຳນວນໜຶ່ງ, ຕາງໜ້າ 6 ພາກສ່ວນໃນຂົງເຂດຕຸລາການຂອງແຂວງ ໄດ້ຍົກໃຫ້ເຫັນຜົນສຳເລັດທີ່ພົ້ນເດັ່ນຂອງການຈັດຕັ້ງປະຕິບັດວຽກງານຕາມສິດໜ້າທີ່ຄວາມຮັບຜິດຊອບ ທັງຍົກໃຫ້ເຫັນບັນຫາພົ້ນເດັ່ນຈຳນວນໜຶ່ງ; ບັນດາທ່ານ ສສຊ ແລະ ສສຂ ກໍໄດ້ມີການເຈາະຈີ້ມຕໍ່ບາງບັນຫາເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງ ຍົກໃຫ້ເຫັນຂໍ້ມູນລາຍລະອຽດ.

ຈາກນັ້ນ, ສສຊ-ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX, ກອງປະຊຸມສະໄໝວິສາມັນເທື່ອທີ 2 ແລະ ສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ IV ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງຊາດ-ຂອງທ້ອງຖິ່ນ ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ; ພ້ອມກັນນີ້, ຜູ້ມີສິດເລືອກຕັ້ງຍັງໄດ້ມີຄຳຄິດເຫັນ, ຄຳສະເໜີຫຼາຍບັນຫາ ເຊິ່ງບັນດາທ່ານສະມາຊິກສະພາ ກໍໄດ້ແລກປ່ຽນບົດຮຽນ ແລະ ຊີ້ແຈງອະທິບາຍຕໍ່ບາງຄຳສະເໜີ.

ທ່ານ ສິມມາດ ພົລເສນາ ໄດ້ສະແດງຄວາມຊົມເຊີຍຕໍ່ທຸກພາກສ່ວນທີ່ເອົາໃຈໃສ່ປະຕິບັດວຽກງານຕາມຄວາມຮັບຜິດຊອບ, ສາມາດຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນຫຼາຍດ້ານ ທັງເນັ້ນໜັກໃຫ້ສືບຕໍ່ຮັກສາມູນເຊື້ອອັນດີງາມ ແລະ ເອົາໃຈໃສ່ຢ່າງຕັ້ງໜ້າໃນການປະຕິບັດໜ້າທີ່ຕົ້ນຕໍຄື: ວຽກງານປ້ອງກັນພະຍາດ, ປິ່ນປົວ, ຟື້ນຟູ, ການຕິດຕາມຊຸກຍູ້ດ້ານວິຊາການ, ການກໍ່ສ້າງບຸກຄະລາກອນສາທາລະນະສຸກ, ການຄົ້ນຄວ້າວິທະຍາສາດ ແລະ ເອົາໃຈໃສ່ການໃຫ້ບໍລິການສຸຂະພາບພາຍໃຕ້ລະບົບປະກັນແຫ່ງຊາດຕາມນະໂຍບາຍຂອງລັດຖະບານ ໃຫ້ມີປະສິດທິພາບສູງ; ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວແລະຍືນຍົງ; ພ້ອມກັນຕັ້ງໜ້າປະກອບສ່ວນເປັນກຳລັງແຮງໃນທຸກຂະບວນການຢ່າງໜັກແໜ້ນເຂັ້ມແຂງ ເພື່ອສ້າງຜົນງານຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຂອງພັກ, ຂອງແຂວງໃຫ້ມີບັນຍາກາດຟົດຟື້ນ. ໂອກາດນີ້, ທ່ານຮອງປະທານ ສພຊ ໄດ້ມອບເງິນສົດ 10 ລ້ານກີບ ເພື່ອປະກອບສ່ວນຊຸກຍູ້ຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງໂຮງໝໍແຂວງ.

ທ່ານສິມມາດພົລເສນາ ແລະ ຄະນະຈາກພາກສ່ວນທີ່ກ່ຽວຂ້ອງ ຍັງໄດ້ເຄື່ອນໄຫວຕິດຕາມກວດກາ 2 ໂຄງການຢູ່ເມືອງໂຂງ ຄື: ໂຄງການພະລັງງານໄຟຟ້າແສງຕາເວັນ ຂອງບໍລິສັດ ແມ່ໂຂງ ພາວເວີ ແລະ ໂຮງງານປຸງແຕ່ງປາສະຫວາຍ ຂອງບໍລິສັດ ແມ່ໂຂງ ອຸດສາຫະກຳການປະມົງ ຈຳກັດ.

**(ສົມວິຈິດ ໄຊມິນຕີ)**

# ສສຊ, ສສນວ ພົບປະຜູ້ມີສິດເລືອກຕັ້ງ

(ສພຊ) - ໄລຍະວັນທີ 21-28 ສິງຫາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີIV.



ທີ່ສະໂມສອນເມືອງຈັນທະບູລີ ນຳໂດຍທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ລັດຖະມົນຕີກະຊວງກະສິກຳແລະສິ່ງແວດລ້ອມ, ທ່ານ ຄຳຜອງ ແສງສະຫວ່າງ ສສຊ, ຮອງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ທ່ານ ນະຄະເສນ ສີຫາລາດ ເລຂາທິການ ສປນວ, ທ່ານ ບຸນເຖິງ ສຸວັນນະສີ ຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ, ມີບັນດາຄະນະປະຈຳແລະກຳມະການພັກເມືອງ, ຫົວໜ້າຫ້ອງການ, ຄະນະບ້ານ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຢູ່ສະໂມສອນເມືອງໄຊເສດຖາ ນຳໂດຍທ່ານ ບຸນທານ ພຸດທະວົງສາ ສສຊ, ຮອງປະທານ ສປນວ ເຊິ່ງມີທ່ານ ວົງສະຫວັນດອນພູຫຼວງຮອງປະທານຄະນະກຳມະການປົກຄອງເມືອງ (ຄປມ) ພ້ອມດ້ວຍບັນດາກຳມະການປະຈຳພັກເມືອງ, ຫົວໜ້າຫ້ອງການ, ປະຊາຊົນໃນເຂດກຸ່ມ 1 ກຸ່ມ 2 ແລະ ກຸ່ມ 3 ເຂົ້າຮ່ວມ. ປະຊາຊົນໄດ້ສະເໜີບັນຫາຂັດຂ້ອງໝອງໃຈຕ່າງໆເພື່ອນຳໄປສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂຄວາມເປັນຈິງ ເປັນຕົ້ນແມ່ນບັນຫາຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ທີ່ຕິດພັນກັບການພັດທະນາບ້ານ ໂດຍສະເພາະການຈັດສັນເສັ້ນທາງບາງຮ່ອມໃນເຂດບ້ານວຽງຈະເລີນໃຫ້ມີຄວາມເປັນລະບຽບ, ເມື່ອເກີດເຫດກໍລະນີສຸກເສີນ ກໍໃຫ້ການສັນຈອນໄປ-ມາສະດວກຂຶ້ນ; ການເຂົ້າເຖິງສັນຍາຂີ້ເຫຍື້ອຂອງປະຊາຊົນຈຳນວນໜຶ່ງຍັງບໍ່ທົ່ວເຖິງ ໂດຍສະເພາະບາງຮ່ອມເຖິງແມ່ນວ່າໄດ້ເຮັດສັນຍາຂີ້ເຫຍື້ອແລ້ວ ແຕ່ລົດຂົນສິ່ງຂີ້ເຫຍື້ອຍັງບໍ່ມາເອົາຂີ້ເຫຍື້ອຕາມມື້ນັດໝາຍ ເຮັດໃຫ້ເກີດມີສະພາບການຖິ້ມຂີ້ເຫຍື້ອຊະຊາຍ, ສ້າງຄວາມເປື້ອນເປິ, ສິ່ງກິ່ນເໝົ່າເໝັນ; ການຄຸ້ມຄອງລາຄາຄ່າຮຽນຂອງໂຮງຮຽນພາກເອກະຊົນ, ສະເໜີໃຫ້ພາກລັດຄວນມີການແຊກແຊງທີ່ເໝາະສົມ ເນື່ອງຈາກຄ່າຮຽນໂຮງຮຽນເອກະຊົນບາງແຫ່ງສູງເກີນໄປ ເຮັດໃຫ້ເຂົ້າເຖິງຍາກ.

ທີ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນຳໂດຍທ່ານ ບຸນທານ ພຸດທະວົງສາ, ທ່ານ ຄຳຜອງ ແສງສະຫວ່າງ, ທ່ານ ນາງ ພົດສະໄໝ ຕົ້ນສະຫວັນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ທັງເປັນຮອງຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ ເຊິ່ງມີຄະນະພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ຈາກພະແນກການດັ່ງກ່າວ, ອົງການໄອຍະການປະຊາຊົນ ແລະ ອົງການກວດສອບປະຈຳພາກກາງ ເຂົ້າຮ່ວມຢ່າງພ້ອມພຽງ.

ທີ່ອົງການປົກຄອງເມືອງສີໂຄດຕະບອງ ນຳໂດຍທ່ານ ພົທ. ຈັນທະລາ ອຸດົມສຸກ ກຳມະການປະຈຳກຳມາທິການຍຸຕິທຳ, ທ່ານ ນາງ ວຽງພອນ ແກ້ວຄູນສີ ກຳມະການພັກ ນວ, ຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວ, ທ່ານ ສົມບັດ ຈັນທະມາດ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ເຊິ່ງມີທ່ານ ອິນປອງ ທຸມມາ ຮອງເລຂາຄະນະພັກ, ຮັກສາການປະທານຄະນະກຳມະການປົກຄອງເມືອງ ແລະ ພະນັກງານຫຼັກແຫຼ່ງພາຍໃນເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທີ່ກອງບັນຊາການປ້ອງກັນຄວາມສະຫງົບ ນຳໂດຍທ່ານ ພົທ. ຈັນທະລາ ອຸດົມສຸກ, ທ່ານ ທະນົງສິດ ເມືອງຈັນ ສສຊ, ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ, ທ່ານ ປອ. ນາງ ວາລີ ເວດສະພົງ ສສຊ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເຊິ່ງມີທ່ານ ພົຈວ. ບົວພັນ ຟອງມະນີ ຫົວໜ້າກອງບັນຊາການ ປກສ ພ້ອມດ້ວຍນາຍ ແລະ ພົນຕຳຫຼວດ ເຂົ້າຮ່ວມຢ່າງພ້ອມພຽງ. ຜູ້ເຂົ້າຮ່ວມໄດ້ສະເໜີຫຼາຍບັນຫາ ເປັນຕົ້ນແມ່ນການກວດກາ ແລະ ແກ້ໄຂບັນຫາກ້ອງວົງຈອນປິດທີ່ບໍ່ສາມາດນຳໃຊ້ໄດ້ ເຮັດໃຫ້ວຽກງານການແກ້ໄຂປາກົດການຫຍໍ້ທໍ້ ພົບຄວາມຫຍຸ້ງຍາກຫຼາຍ; ເພີ່ມທະວີອຳນວຍຄວາມສະດວກໃນການສະໜອງຄຳຕັດສິນຂອງສານໃຫ້ເຈົ້າໜ້າທີ່ປກສຕື່ມອີກ ເນື່ອງຈາກຕິດພັນກັບການປ່ອຍຕົວ, ການເຄື່ອນຍ້າຍ ແລະ ການຄິດໄລ່ອັດຕາກິນໃຫ້ນັກໂທດ; ສະເໜີໃຫ້ສ້ອມ ແປງເສັ້ນທາງໄປຄ້າຍຂຸມຂ້ຽງນາໄຫນາໂນທີ່ເປ່ເພ ເຮັດໃຫ້ການສັນຈອນໄປມາພົບຄວາມຫຍຸ້ງຍາກ.

ທີ່ສະໂມສອນປົກຄອງເມືອງຫາດຊາຍຟອງ ນຳໂດຍທ່ານ ນາງ ເກດມະນີ ບັນດາສັກ ສສຊ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ທ່ານ ສຸກສະຫວັນ ບຸດຕະວົງ ຫົວໜ້າຄະນະສສນວ ປະຈຳເຂດເລືອກຕັ້ງເມືອງ, ທ່ານ ລຳເພັດ ຄຳຄໍ້ຣົມພັນ ຮອງຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ ເຊິ່ງມີເລຂາພັກບ້ານ, ນາຍບ້ານ, ອົງການຈັດຕັ້ງມະຫາຊົນ, ປກຊ-ປກສ ແລະ ແນວໂຮມບ້ານ ເຂົ້າຮ່ວມ.

ທີ່ເມືອງປາກງື່ມນຳໂດຍ ທ່ານນາງສົມພຽນວົງໄຊສສຊ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ທ່ານ ສາລະພົດ ສູນວໍລະວົງ ສສຊ, ຫົວໜ້າພະແນກແຮງງານແລະສະຫວັດດີການສັງຄົມ, ທ່ານ ຂັນທີ ສີວິໄລ ຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ, ທ່ານ ຄຳພາວ ໂພຂາວ ຮອງຫົວໜ້າຄະນະສສນວ ປະຈຳເຂດເລືອກຕັ້ງເມືອງ, ປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມ, ທ່ານ ບຸນທະວີ ສີແສນດີ ຫົວໜ້າອົງການໄອຍະການປະຊາຊົນເຂດ II ເຊິ່ງມີບັນດາຄະນະປະຈຳພັກເມືອງ, ຫົວໜ້າຫ້ອງການ ແລະ ຄະນະບ້ານພາຍໃນເມືອງ ເຂົ້າຮ່ວມຢ່າງພ້ອມພຽງ. ຜູ້ເຂົ້າຮ່ວມໄດ້ສະເໜີໃຫ້ພາກລັດແກ້ໄຂບັນຫາການປະລະການຮຽນຂອງນັກຮຽນ ແລ້ວໂຕນໜີໄປອອກແຮງງານຢູ່ຕ່າງປະເທດເພີ່ມຂຶ້ນ ເຮັດໃຫ້ສັງຄົມຂາດເຂີນແຮງງານຈຳນວນຫຼາຍ, ປັບໂຄງສ້າງລາຄາໄຟຟ້າຄືນໃໝ່ໃຫ້ເໝາະສົມກັບຄອບຄົວຜູ້ທີ່ມີລາຍໄດ້ຕ່ຳ, ການຈະປັບຂຶ້ນລາຄາໄຟຟ້າໃນແຕ່ລະປີນັ້ນ ຈະກະທົບຕໍ່ການດຳລົງຊີ ວິດຂອງປະຊົນຢ່າງຫຼີກລ່ຽງບໍ່ໄດ້.

ທ່ານ ນາງ ສົມພຽນ ວົງໄຊ ພ້ອມດ້ວຍຄະນະສືບຕໍ່ເຄື່ອນໄຫວຢູ່ພະແນກອຸດສາຫະກຳ ແລະການຄ້າ (ອຄ) ໂດຍມີທ່ານ ນາງ ວັນມະນີ ພົມມະສານ ຫົວໜ້າພະແນກ ອຄ, ບັນດາຄະນະພະແນກ, ຫົວໜ້າ-ຮອງຂະແໜງ ແລະ ພະນັກງານຫຼັກແຫຼ່ງ ເຂົ້າຮ່ວມຢ່າງພ້ອມພຽງ. ຜູ້ເຂົ້າຮ່ວມສະເໜີໃຫ້ພາກລັດສົ່ງເສີມການປູກ-ການລ້ຽງ ໂດຍສະເພາະການສົ່ງເສີມລ້ຽງໃນພື້ນທີ່ເໝາະສົມຂອງປະຊາຊົນເອງ, ໃຫ້ມີການຕິດຕາມເປັນປະຈຳ ເພື່ອສ້າງໃຫ້ປະຊາຊົນມີລາຍຮັບຈາກການຜະລິດເພີ່ມຂຶ້ນ; ແກ້ໄຂບັນການຕັດເງິນ 3,000 ກີບ ຂອງເຄືອຂ່າຍບໍລິສັດໂທລະຄົມມະນາ ແຕ່ບໍ່ໄດ້ຮັບການປົກປ້ອງເທົ່າທີ່ຄວນ, ຍັງພົບເຫັນມີກຸ່ມສໍ້ໂກງ (Call center) ໂທຕົວະຍົວະຫຼອກລວງ ສ້າງຄວາມເສຍຫາຍໃຫ້ປະຊາຊົນເປັນຈຳນວນຫຼວງຫຼາຍ; ແກ້ໄຂບັນຫາການສະໜອງນ້ຳປະປາບໍ່ພຽງພໍໃນບາງເຂດຕົວເມືອງ; ແກ້ໄຂການເກັບເງິນໃນສະຖານທີ່ຈອດລົດຢູ່ໂຮງໝໍບາງແຫ່ງ ທີ່ຍັງພົບເຫັນການເກັບເງິນເປັນປະຈຳໃນເວລາພາຄົນເຈັບໄປໂຮງໝໍ ຫຼື ຢ້ຽມຢາມຄົນເຈັບ; ແກ້ໄຂບັນຫາການຊົດເຊີຍຄ່າທີ່ດິນທີ່ຖືກໂຄງການຂອງລັດໃຫ້ປະຊາຊົນ ທີ່ມີຄວາມຊັກຊ້າ ແລະ ແກ່ຍາວມາເປັນເວລາຫຼາຍປີ; ແກ້ໄຂການເກັບມ້ຽນຂີ້ເຫຍື້ອຂອງບໍລິສັດຂົນສົ່ງຂີ້ເຫຍື້ອ ທີ່ມາເອົາຂີ້ເຫຍື້ອບໍ່ທົ່ວເຖິງ; ບັນຫາລົດແກ່ດິນຕຶກເຮ່ຍຕາມທົນທາງໃນຕົວເມືອງ ໃຫ້ມີມາດຕະການແກ້ໄຂຢ່າງເຂັ້ມງວດ; ແກ້ໄຂບັນຫາໄຟເຍືອງທາງຫຼາຍຈຸດທີ່ເປ່ເພ; ໃຫ້ມີມາດຕະການຄຸ້ມຄອງການເພີ່ມຄ່າຮຽນຂອງໂຮງຮຽນພາກເອກະຊົນ; ປັບປຸງເສັ້ນທາງຮ່ອມ-ທາງຊອຍແຕ່ລະບ້ານ.

ຢູ່ສະໂມສອນເມືອງສີສັດຕະນາກ ນຳໂດຍທ່ານ ພອນສິນ ສາວະລີ ຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ, ທ່ານ ນາງສົມປະເສີດ ສີຫາລາດ ສສຊ, ຮອງປະທານແນວລາວສ້າງຊາດ, ທ່ານ ນາງ ຄຳແຫວນ ສິງບັນດິດ ສສຊ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຮອງຫົວໜ້າຄະນະ ສສນວປະຈຳເຂດເລືອກຕັ້ງເມືອງ ແລະ ທ່ານ ປະສາດໄຊ ພິລາພັນ ເດຊຜູ້ອຳນວຍການບໍລິສັດລາວໂຕໂຍຕາ ບໍລິການ ຈຳກັດ; ເຂົ້າຮ່ວມມີທ່ານ ສິດປະເສີດ ອຸເທນທະປັນຍາ ຮັກສາການເລຂາພັກເມືອງ, ທ່ານ ປອ. ທິນນະກອນ ທອງຄຳ ຮອງເລຂາພັກເມືອງ, ຮັກສາການປະທານ ຄປມ, ບັນດາຄະນະປະຈຳ ແລະ ກຳມະການພັກເມືອງ, ຫົວໜ້າ 2 ກອງບັນຊາການ, ຫົວໜ້າຫ້ອງການ ແລະ ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ພະນັກງານຫຼັກແຫຼ່ງ ແລະ ອ້າຍນ້ອງໃນ 2 ກອງກຳລັງ, ເລຂາພັກບ້ານ-ນາຍບ້ານ ພ້ອມດ້ວຍຄະນະອົງການປົກຄອງບ້ານທັງໝົດທົ່ວເມືອງ ລວມມີຜູ້ເຂົ້າຮ່ວມທັງໝົດ 386 ຄົນ ຍິງ 174 ຄົນ ໂດຍໄດ້ຮັບຟັງຄຳຄິດເຫັນຊີ້ແຈງຈາກຂະແໜງການກ່ຽວຂ້ອງຂອງເມືອງ ຕໍ່ຫາງສຽງຄຳສະເໜີຂອງປະຊາຊົນກ່ຽວກັບວຽກງານທີ່ດິນ, ການສ້ອມແປງເສັ້ນທາງ ແລະ ການສ້າງຮ່ອງລະບາຍນ້ຳ ເຊິ່ງທຸກໆບັນຫາລ້ວນໄດ້ຮັບການຄົ້ນຄວ້າ ແລະ ມີແຜນຈະໄດ້ຮັບແກ້ໄຂໃຫ້ດີຂຶ້ນ.



ຢູ່ສະໂມສອນເມືອງນາຊາຍທອງ ນຳໂດຍທ່ານ ປອ. ນາງ ວາລີ ເວດສະພົງ ສສຊ, ຮອງປະທານສະພາການຄ້າແລະອຸດສາຫະກຳແຫ່ງຊາດ, ທ່ານ ແສງວິໄລ ສີລັດຕະນະ ຮອງຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ ເຊິ່ງມີການນຳເມືອງ, ພະນັກງານ, ທະຫານ-ຕຳຫຼວດ, ອຳນາດການປົກບ້ານທົ່ວເມືອງເຂົ້າຮ່ວມ; ຜູ້ເຂົ້າຮ່ວມໄດ້ສະເໜີຫຼາຍບັນຫາເປັນຕົ້ນແມ່ນຄູສອນນັບມື້ຫຼຸດລົງ ເນື່ອງຈາກບໍ່ໄດ້ບັນຈຸເຂົ້າເປັນລັດຖະກອນ, ເສັ້ນທາງເປ່ເພ, ໄຟຟ້າ-ຄ່າຄອງຊີບແພງ.






# ຄປຈສພຂຫຼວງນ້ຳທາພິຈາລະນາຫຼາຍບັນຫາສຳຄັນຂອງແຂວງ




(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ຫຼວງນ້ຳທາ ໄດ້ຈັດຂຶ້ນເມື່ອຕອນບ່າຍວັນທີ 13 ສິງຫາຜ່ານມາ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານ ຄປຈສພຂ ເຊິ່ງກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາໜັງສືສະເໜີຂອງເຈົ້າແຂວງ ສະບັບເລກທີ 83/ຈຂ, ລົງວັນທີ 23 ກໍລະກົດ 2025 ກ່ຽວກັບການສະເໜີໃຫ້ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍໃຫ້ຜູ້ທີ່ຖືກຜົນກະທົບຈາກໂຄງການພັດທະນາກະສິກຳ, ອຸດສາຫະກຳ, ການບໍລິການແລະການທ່ອງທ່ຽວເຂດດ່ານປາງໄຮ ເມືອງສິງ; ໜັງສືສະເໜີຂອງເຈົ້າແຂວງ ສະບັບເລກທີ 92/ຈຂ, ລົງວັນທີ 5 ສິງຫາ 2025 ກ່ຽວກັບການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນ ທ້າຍປີ 2025; ໜັງສືສະເໜີຂອງເຈົ້າແຂວງ ສະບັບເລກທີ 106/ຈຂ, ລົງວັນທີ 7 ສິງຫາ 2025 ກ່ຽວກັບການຮັບຮອງເອົາໂຄງການລົງທຶນຂອງລັດປະເພດ V ທີ່ມີມູນຄ່າ 50 ຕື້ກີບລົງມາ ຮ່ວງກອງທຶນວຽກງານບູລະ ນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດ ປີ 2025 ຮ່ວງ 20% 7 ໂຄງການ ມູນຄ່າ 7,200 ລ້ານກີບ; ໜັງສືສະເໜີຂອງເຈົ້າແຂວງ ສະບັບເລກທີ 107/ຈຂ, ລົງວັນທີ 7 ສິງຫາ 2025 ກ່ຽວກັບການຮັບຮອງເອົາໂຄງການລົງທຶນຂອງລັດປະເພດ V ທີ່ມີມູນຄ່າ 50 ຕື້ກີບລົງມາ ຮ່ວງກອງທຶນທາງວຽກງານບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດ ປີ 2025 ຮ່ວງ 80% 3 ໂຄງການ ມູນຄ່າ23,238ລ້ານກີບ. ນອກນັ້ນ, ຍັງໄດ້ປຶກສາຫາລື, ຄົ້ນຄວ້າແຜນການ ຈັດຊື້ຈັດຈ້າງ, ໜັງສືສະເໜີຂອງເລຂາທິການສະພາປະຊາຊົນແຂວງ ສະບັບເລກທີ 669/ຄລຂ.ສພຂ, ລົງວັນທີ 12 ສິງຫາ 2025 ກ່ຽວກັບການສະເໜີສ້ອມແປງພາຫະນະຈຳນວນໜຶ່ງແລະບັນຫາອື່ນໆຕາມການສະເໜີຂອງບັນດາທ່ານກຳມະການ ຄປຈສພຂ.

ຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນເນັ້ນໜັກໃຫ້ບັນດາຄະນະກຳມະການແລະຄະນະເລຂາທິການ ຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂອງກອງປະຊຸມຄັ້ງນີ້ໃຫ້ສຳເລັດພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດໃນກອງປະຊຸມ ຄປຈສພຂ ປະຈຳເດືອນຕຸລາ.

ຕອນບ່າຍວັນຕໍ່ມາ, ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດຕັ້ງພິທີສະເຫຼີມສະຫຼອງວັນປະກາດໃຊ້ລັດຖະທຳມະນູນແຫ່ງ ສປປລາວ ຄົບຮອບ 34 ປີ(15/8/1991-15/8/2025) ແລະວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຄົບຮອບ 47 ປີ (04/8/1978-04/8/2025) ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ໂດຍມີບັນດາຫົວໜ້າ-ຮອງຫົວໜ້າ 2 ກອງບັນຊາການ, ພະແນກການ ແລະ ອົງການທຽບເທົ່າ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ. ໂອກາດນີ້, ທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໄດ້ຍົກໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນຂອງລັດຖະທຳມະນູນພ້ອມທັງເຜີຍແຜ່ລັດຖະທຳມະນູນ ສະບັບປີ 2025 ແລະ ທ່ານ ກົງເພັດແກ້ວບົວພາກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໄດ້ເຜີຍແຜ່ ແລະ ປາຖະກະຖາມູນເຊື້ອວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ.

ວັນທີ 15 ສິງຫາ, ຂົງເຂດຕຸລາການ ໄດ້ສ້າງຂະບວນການແຂ່ງຂັນກິລາມິດຕະພາບບານເຕະຊາຍ 7 ຄົນ 4 ພາກສ່ວນ ເພື່ອສະເຫຼີມສະຫຼອງວັນປະກາດໃຊ້ລັດຖະທຳມະນູນແຫ່ງ ສປປລາວ ຄົບຮອບ 34 ປີ, ວັນສ້າງຕັ້ງສະພາປະຊາຊົນຊັ້ນແຂວງ ຄົບຮອບ 47 ປີ ແລະ ວັນສ້າງຕັ້ງສານປະຊາຊົນ ຄົບຮອບ 43 ປີ(15/8/1982-15/8/2025) ເຊິ່ງມີທ່ານ ຄຳຟອງ ອິນມານີ, ທ່ານ ທອງແດງ ສິດທິສິນ ປະທານສານປະຊາຊົນແຂວງ, ຜູ້ຕາງໜ້າຈາກສະພາປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ພະແນກຍຸຕິທຳແຂວງ ຕະຫຼອດຮອດນັກກິລາເຂົ້າຮ່ວມຢ່າງພ້ອມພຽງ. ໂອກາດດັ່ງກ່າວ, ສພຂ ໄດ້ຮັບການສະໜັບສະໜູນເຄື່ອງກິລາຈາກບໍລິສັດ ແກ້ວວິໄລ ກໍ່ສ້າງ ຈຳກັດ ຈຳນວນ 30 ກວ່າຊຸດ ລວມມູນຄ່າເກືອບ 4 ລ້ານກີບ ໂດຍການກ່າວມອບຂອງທ່ານຄຳໄຊແກ້ວວິໄລ ຫົວໜ້າບໍລິສັດດັ່ງກ່າວ ແລະກ່າວຮັບໂດຍທ່ານກົງເພັດແກ້ວບົວພາ; ພ້ອມກັນນັ້ນ, ທ່ານ ລໍຊາ ສາປໍ ເມືອງສິງ ກໍໄດ້ສະໜັບສະໜູນຊຸດກິລາ 15 ຊຸດ ມູນຄ່າ 2 ລ້ານກວ່າກີບ.






**(ນາງ ອຳພອນ ສີປະເສີດ ແລະ ນາງ ອາເມີງ ວີແຄລູ)**



## ເລຂາ...

(ຕໍ່ຈາກໜ້າ 1)

ພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ນວ) ພ້ອມດ້ວຍຄະນະ ໄດ້ເດີນທາງໄປເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາຫວຽດນາມ ຄົບຮອບ 80 ປີແລະສືບຕໍ່ຢ້ຽມຢາມເຮັດວຽກຢູ່ນະຄອນຫຼວງຮ່າໂນ້ຍ ເມື່ອວັນທີ 1-4 ກັນຍາຜ່ານມາ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດເວົ້າລວມ, ເວົ້າສະເພາະລະຫວ່າງນະຄອນຫຼວງວຽງຈັນ ແລະ ນະຄອນຫຼວງຮ່າໂນ້ຍ ທີ່ມີມາຍາວນານ ໃຫ້ນັບມື້ນັບແຕກດອກອອກຜົນ ແລະ ກ້າວເຂົ້າສູ່ລວງເລິກຍິ່ງຂຶ້ນ.

ໂອກາດນີ້, ສອງຝ່າຍໄດ້ປຶກສາຫາລືຫຼາຍບັນຫາທີ່ຕ່າງຝ່າຍຕ່າງມີຄວາມສົນໃຈ ໂດຍສະຫາຍ ນາງ ບຶ່ງ ທິ ທູ ຮວ່າຍ ໄດ້ເນັ້ນວ່າ: ບົນພື້ນຖານການຮ່ວມມືອັນດີລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດ, ນະຄອນຫຼວງຮ່າໂນ້ຍ ຍາມໃດກໍໃຫ້ບຸລິມະສິດສູງໃນການຊຸກຍູ້ການພົວພັນຮ່ວມມືກັບນະຄອນຫຼວງວຽງຈັນ ແລະ ໃນຕົວຈິງ ໄດ້ມີຫຼາຍໂຄງການຮ່ວມມືຢ່າງມີປະສິດທິຜົນ ນຳມາເຊິ່ງຜົນປະໂຫຍດໃຫ້ປະຊາຊົນສອງປະເທດ; ປີ 2025 ແມ່ນປີທີ່ມີຄວາມໝາຍຄວາມສຳຄັນພິເສດຕໍ່ການພົວພັນຮ່ວມມືລະຫວ່າງ 2 ນະຄອນຫຼວງ ທັງແມ່ນໄລຍະສືບຕໍ່ປະຕິບັດບົດບັນທຶກການຮ່ວມມືລະຫວ່າງນະຄອນຫຼວງຮ່າໂນ້ຍ-ນະຄອນຫຼວງວຽງຈັນດ້ວຍຫຼາຍຮູບຫຼາຍແບບຢ່າງມີປະສິດທິຜົນສູງ, ສະແດງໃຫ້ເຫັນຄວາມສາມັກຄີແບບພິເສດຂອງການຮ່ວມມືລະຫວ່າງ 2 ນະຄອນຫຼວງຢ່າງແທ້ຈິງ. ນອກນີ້, ສອງຝ່າຍຍັງໄດ້ລາຍງານສະພາບເສດຖະກິດຂອງຕົນໃຫ້ກັນແລະກັນຊາບອີກດ້ວຍ.

**(ສົມສະຫວັນ, ເພຈ: ວຽງຈັນໃໝ່/VientianeMai)**

# ຕິດຕາມກວດກາການຂໍຫັນປ່ຽນປະເພດດິນປ່າໄມ້ ເປັນດິນປະເພດອື່ນລັກສະນະຊົ່ວຄາວແລະຖາວອນ



(ສພຂ) - ວັນທີ 28 ກໍລະກົດຜ່ານມາ; ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອັດຕະປື ໄດ້ມີກອງປະຊຸມຕິດຕາມກວດກາການຂໍຫັນປ່ຽນປະເພດດິນປ່າໄມ້ ເປັນດິນປະເພດອື່ນລັກສະນະຊົ່ວຄາວ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ປະທານຄະນະປະຈຳສະພາປະຊາຊົນແຂວງ (ຄປຈ ສພຂ), ເຂົ້າຮ່ວມມີບັນດາທ່ານໃນ ຄປຈສພຂ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຊານໄຊ, ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ຕາງໜ້າຫ້ອງວ່າການແຂວງ-ເມືອງ, ພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະຫ້ອງການທີ່ກ່ຽວຂ້ອງຂອງເມືອງ, ພະນັກງານຂະແໜງການທີ່ກ່ຽວຂ້ອງ, ຕາງໜ້າບໍລິສັດ ວັງຕັດສຳຫຼວດແຮ່ທາດຈຳກັດ, ອຳນາດການປົກຄອງກຸ່ມບ້ານ ແລະ ບ້ານໜອງໄກ່ໂອກ.

ຜູ້ຕາງໜ້າບໍລິສັດ ວັງຕັດສຳຫຼວດແຮ່ທາດ ຈຳກັດ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດການພັດທະນາໂຄງການ ໂດຍຫຍໍ້ໃຫ້ຊາບວ່າ: ບໍລິສັດໄດ້ເຊັນສັນຍາວ່າດ້ວຍການຊອກຄົ້ນ ແລະ ສຳຫຼວດ ກັບ ລັດຖະບານ ເມື່ອປີ 2019 ໃນເນື້ອທີ່ 21,930 ເຮັກຕາ (ຮຕ) ຢູ່ເຂດວັງຕັດ ເມືອງຊານໄຊ, ປີ 2021 ບໍລິສັດ ໄດ້ຮັບອະນຸຍາດເພີ່ມແຮ່ເຫຼັກເຂົ້າໃນສັນຍາ ແລະ ໄດ້ນຳເອົາເນື້ອທີ່ທັງໝົດກ້າວເຂົ້າສູ່ຂັ້ນຕອນຕໍ່ໄປຄື: 252 ຮຕ ຢູ່ໃນຂັ້ນຕອນດຳເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ເຫຼັກ, 21,228 ຮຕ ຮັກສາໄວ້ສືບຕໍ່ສຳຫຼວດລະອຽດ, 450 ຮຕ ໄດ້ສະເໜີເຂົ້າສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ ແຕ່ຈະນຳໃຊ້ຕົວຈິງ 8 ຮຕ ແລະ 8,850 ຕາແມັດທີ່ນອນໃນປ່າສະຫງວນແຫ່ງຊາດດົງອຳພາມ ເຂດບ້ານໜອງໄກ່ໂອກ ເມືອງຊານໄຊ; ນອກນີ້, ຍັງໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປຶກສາຫາລື, ແລກປ່ຽນ ກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ແລະ ບັນຫາອື່ນໆທີ່ອາດຈະເກີດຂຶ້ນຈາກການພັດທະນາຂອງໂຄງການ ເພື່ອໃຫ້ມີຄວາມເປັນເອກະພາລະຫວ່າງຂັ້ນທ້ອງຖິ່ນ ແລະ ສູນກາງ.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນເນັ້ນໜັກໃຫ້ອົງການປົກຄອງເມືອງ ເປັນເຈົ້າການສົມທົບກັບອົງການຈັດຕັ້ງບ້ານ ສະໜອງຂໍ້ມູນໃຫ້ຊັດເຈນ ໂດຍສະເພາະເຂດພັດທະນາໂຄງການ. ບໍລິສັດຕ້ອງຮັບປະກັນດ້ານສິ່ງ ແວດລ້ອມຢ່າງແນ່ນອນໃນການສຳຫຼວດ ແລະ ດຳເນີນກິດຈະການ; ສືບຕໍ່ສະໜອງເສັ້ນທາງ, ແນວພັນພືດ-ສັດ ໃຫ້ປະຊາຊົນ; ເອົາໃຈໃສ່ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດວຽກງານການຊົດເຊີຍ; ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ຮັບປະກັນບໍ່ໃຫ້ມີບັນຫາການຕົກຫຼົ່ນຫຼືການຮ້ອງຟ້ອງ, ຮ້ອງຂໍຄວາມເປັນທຳໃນອະນາຄົດທັງເອົາໃຈໃສ່ຢ່າງໃກ້ຊິດ ຕິດຕາມການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຈາກການພັດທະນາໂຄງການ ເພື່ອຮັບປະກັນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ ແລະ ເອົາໃຈໃສ່ຕິດຕາມຢ່າງໃກ້ຊິດຕໍ່ບັນຫາຜົນກະທົບທີ່ອາດຈະເກີດຂຶ້ນຈາກໂຄງການພັດທະນາ; ຄົ້ນຄວ້າ, ປັບປຸງນະໂຍບາຍ ແລະ ນິຕິກຳກ່ຽວກັບການສົ່ງເສີມວຽກງານການຟື້ນຟູ ແລະ ປູກໄມ້ ໂດຍການມີສ່ວນຮ່ວມລະຫວ່າງພາກລັດ, ຜູ້ປະກອບການ ແລະ ປະຊາຊົນ ໃຫ້ມີຄວາມຊັດເຈນ ແລະ ຮັດກຸມ; ສ້າງແຜນການຟື້ນຟູປ່າ, ປູກໄມ້ທົດແທນແລະປົກປັກຮັກສາໃນແຕ່ລະຂົງເຂດໃຫ້ລະອຽດຈະແຈ້ງ; ແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຕ່ລະຂັ້ນໃຫ້ລະອຽດຊັດເຈນໂດຍການມີສ່ວນຮ່ວມຂອງປະຊາຊົນໃນແຕ່ລະທ້ອງຖິ່ນ ພ້ອມທັງມີລະບຽບການຄຸ້ມຄອງ ແລະຕິດຕາມກວດກາຢ່າງເປັນລະບົບ ແລະ ຕໍ່ເນື່ອງ; ສຸມໃສ່ຕິດຕາມກວດກາແລະສັງລວມການປະຕິບັດພັນທະຕ່າງໆ ກ່ຽວກັບວຽກງານຟື້ນຟູປ່າໄມ້ ແລະ ປູກໄມ້ທົດແທນ ຕາມສັນຍາສຳປະທານ, ກົດໝາຍ, ມະຕິສະພາແຫ່ງຊາດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ.

ຕໍ່ມາໃນວັນທີ 30 ກໍລະກົດ, ກໍໄດ້ມີກອງປະຊຸມຕິດຕາມກວດກາການຂໍຫັນປ່ຽນປະເພດດິນປ່າໄມ້ ເປັນດິນປະເພດອື່ນລັກສະນະຖາວອນ ທີ່ນອນໃນປ່າປ້ອງກັນແຫ່ງຊາດແຫຼ່ງນ້ຳກົງ-ເຊຊຸ ແລະ ປ່າຜະລິດນ້ຳກົງ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ເຊິ່ງຄັ້ງນີ້ ມີບັນດາທ່ານ ສສຂ ປະຈຳເຂດເລືອກຕັ້ງເມືອງສະໜາມໄຊ ແລະ ເມືອງພູວົງ, ອຳນາດການປົກຄອງ 5 ບ້ານຄື: ຄັນໝາກນາວ, ຫາດຊາຍສູງ, ນ້ຳກົງ, ວົງລະຄອນ ແລະ ວຽງໄຊ ເຂົ້າຮ່ວມນຳ; ຈຸດປະສົງກໍເພື່ອຮັບປະກັນໃນການຢັ້ງຢືນເນື້ອທີ່ປ່າໄມ້ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ທີ່ອາດຈະຂຶ້ນຈາກການພັດທະນາໂຄງການ ແລະ ເປັນຂໍ້ມູນລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າ, ພິຈາລະນາຕົກລົງບັນຫາກ່ຽວກັບການຂໍຫັນປ່ຽນປະເພດດິນເພື່ອນຳໃຊ້ເຂົ້າໃນການກໍ່ສ້າງແລວສາຍສົ່ງໄຟຟ້າແຮງສູງ 115 KV ຈາກສະຖານີເຂື່ອນໄຟຟ້າເຊກະໝານຕອນລຸ່ມ A ຢູ່ເມືອງສະໜາມໄຊ ຫາສະຖານີໃໝ່ 500 KV ຢູ່ເມືອງພູວົງ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມນິຕິກຳ ແລະ ກົດໝາຍ ນຳໄປສູ່ການສ້າງຄວາມເປັນເອກະພາບລະຫວ່າງຂັ້ນທ້ອງຖິ່ນ ແລະ ສູນກາງ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກພະແນກການທີ່ກ່ຽວຂ້ອງ; ຈາກນັ້ນ, ໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງເລິກເຊິ່ງ ເປັນຕົ້ນແມ່ນການຫັນປ່ຽນທີ່ດິນປ່າໄມ້, ການຄິດໄລ່ຄ່າທຳນຽມ, ການຟື້ນຟູປ່າແລະປູກປ່າທົດແທນຄືນພື້ນທີ່ປ່າໄມ້, ການຟື້ນຟູຊີວິດການເປັນຢູ່, ການຊົດເຊີຍຜົນກະທົບໃຫ້ແກ່ປະຊາຊົນ ທັງນີ້, ກໍເພື່ອຊອກໃຫ້ເຫັນດ້ານດີ ແລະ ດ້ານອ່ອນຂໍ້ຄົງຄ້າງ ທີ່ຕ້ອງໄດ້ຫາວິທີແກ້ໄຂ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີປະສິດທິພາບແລະປະສິດທິຜົນສູງ.



ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນຊີ້ນຳໃຫ້ພາກສ່ວນທີ່ກ່ຽວຂ້ອງຈົ່ງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ມີສ່ວນຮ່ວມ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ກວດກາຄືນສັນຍາການລົງທຶນ, ການຫັນປ່ຽນທີ່ດິນປ່າໄມ້, ເອົາໃຈໃສ່ແກ້ໄຂບັນຫາຜົນກະທົບໂດຍໄວ; ສະເໜີໃຫ້ບໍລິສັດເພີ່ມທະວີການປະສານງານໃຫ້ມີຄວາມຮັດກຸມ ລະຫວ່າງຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ; ສືບຕໍ່ຕິດຕາມຄຸ້ມຄອງຢ່າງໃກ້ຊິດບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນຈາກໂຄງການພັດທະນາ.

**(ວິນັດ ສີສຸລາດ)**

# ຮັບຮອງການແຕ່ງຕັ້ງ 4 ຫົວໜ້າພະແນກການ ແລະ 5 ປະທານຄະນະກຳມະການປົກຄອງເມືອງ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນຊຸດທີ II ໄດ້ດຳເນີນເມື່ອວັນທີ 29-31 ກໍລະກົດຜ່ານມາ ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານ ພອຍຄຳ ຮຸ່ງບຸນຍວງ ເລຂາພັກແຂວງ, ເຈົ້າແຂວງໄຊສົມບູນ, ບັນດາການນຳຂັ້ນສູງຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ສະມາຊິກສະພາປະຊາຊົນແຂວງ ແລະ ບັນດາພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງ ຕະຫຼອດຮອດພະນັກງານອາວຸໂສບຳນານ, ຕາງໜ້າວິສາຫະກິດທັງພາກລັດແລະເອກະຊົນ ພາຍໃນແຂວງ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາແລະລົງຄະແນນສຽງຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຂອງແຂວງຄື: ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2025, ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ການອະນຸຍາດນຳໃຊ້ລົດປະກອບ ແລະ ລົດຊິ້ງ, ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 8-9 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ; ພ້ອມນັ້ນ, ຍັງໄດ້ຮັບຮອງເອົາກົງຈັກການຈັດຕັ້ງອົງການປົກຄອງແຂວງ, ເມືອງ ແລະ ແຕ່ງຕັ້ງບຸກຄະລາກອນເຂົ້າໃນກົງຈັກການຈັດຕັ້ງທີ່ສຳຄັນຂອງອົງການປົກຄອງແຂວງ ແລະ ເມືອງ ຄື:

1. ແຕ່ງຕັ້ງທ່ານ ປອ. ທອງປະເສີດ ໄຊຍະລາດ ກຳມະການພັກແຂວງ ເປັນຫົວໜ້າພະແນກການເງິນ;

2. ແຕ່ງຕັ້ງທ່ານ ບຸນທຽມ ໄຊສິງຄາມ ກຳມະການພັກແຂວງ ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ;

3. ແຕ່ງຕັ້ງທ່ານພູແກ້ວ ອິນທະວົງ ກຳມະການພັກແຂວງ ເປັນຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ;

4. ແຕ່ງຕັ້ງທ່ານ ທົງສະຫວັນ ໂພສະລາດ ເປັນຫົວໜ້າພະແນກວັດທະນະທຳແລະການທ່ອງທ່ຽວ.

ຮັບຮອງ ແລະ ແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງທັງ 5 ເມືອງ ຄື:

1. ແຕ່ງຕັ້ງທ່ານ ພັດທະນາ ສີສົມພອນ ຮອງເລຂາພັກເມືອງເປັນປະທານຄະນະກຳມະການປົກຄອງເມືອງອະນຸວົງ;

2. ແຕ່ງຕັ້ງທ່ານຄຳເຜີຍ ແສງສະຫວ່າງ ຮອງເລຂາພັກເມືອງເປັນປະທານຄະນະກຳມະການປົກຄອງເມືອງທ່າໂທມ;

3. ແຕ່ງຕັ້ງທ່ານ ສັງຄົມ ສູນດາລາ ຮອງເລຂາພັກເມືອງ ເປັນປະທານຄະນະກຳມະການປົກຄອງເມືອງລ້ອງແຈ້ງ;

4. ແຕ່ງຕັ້ງທ່ານສົມພັນ ສີສົມປຶ້ງ ຮອງເລຂາພັກເມືອງ ເປັນປະທານຄະນະກຳມະການປົກຄອງເມືອງລ້ອງຊານ;

5. ແຕ່ງຕັ້ງທ່ານ ຄຳພຸດ ແກ້ວວົງພອນ ຮອງເລຂາພັກເມືອງເປັນປະທານຄະນະກຳມະການປົກຄອງເມືອງຮົ່ມ.

ນອກນັ້ນ, ຍັງຮັບຮອງເອົາຕາແສງ ແລະເອີ້ນຊື່ຕາແສງທົ່ວແຂວງໄຊສົມບູນ ຈຳນວນ 14 ຕາແສງ.

**(ອຳໄພພອນ ແກ້ວວິໄລ)**




# ບາງຂໍ້ຄິດຂອງມື້ສະຫຼອງ 75 ປີ ສື່ມວນຊົນລາວ

# ດົ້ນກົບເມກ



ຜູ້ຂຽນນັບວ່າໂຊກດີທີ່ໄດ້ເຂົ້າຮ່ວມກອງປະຊຸມສຳມະນາວິທະຍາສາດໃນວັນທີ 12 ສິງຫາ 2025 ຜ່ານມາ ທີ່ຫໍວັດທະນະທຳແຫ່ງຊາດ ໂດຍແມ່ນຄະນະໂຄສະນາອົບຮົມສູນກາງພັກ ຮ່ວມກັບກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຈັດຂຶ້ນໃນໂອກາດສະຫຼອງວັນສື່ມວນຊົນ ແລະ ການພິມຈຳໜ່າຍ ຄົບຮອບ 75 ປີ (13 ສິງຫາ 1950-13 ສິງຫາ 2025).

ຜູ້ຂຽນຂໍອະນຸຍາດເກັບກຳບາງຂໍ້ຄິດໃນນາມສ່ວນຕົວໃນບາງຈຸດດັ່ງນີ້: ທີ່ປະຊຸມໄດ້ມີວິທະຍາກອນຫົກທ່ານ ໃນນັ້ນ, ມີຕາງໜ້າສະມາຄົມນັກຂ່າວແຫ່ງປະເທດໄທ, ຜູ້ຕາງໜ້າສຳນັກຂ່າວສານຫວຽດນາມປະຈຳລາວ ໂດຍແມ່ນທ່ານ ສົມສະຫວາດ ພົງສາ ຫົວໜ້າກົມສື່ມວນຊົນ, ຄະນະໂຄສະນາອົບຮົມສູນກາງພັກເປັນຜູ້ດຳເນີນລາຍການ. ຜູ້ຂຽນຂໍຍົກບາງຄຳເຫັນຂອງບັນດາທ່ານມາເລົ່າສູ່ຟັງເຊັ່ນວ່າ: ຜູ້ຕາງໜ້າຈາກສະມາຄົມນັກຂ່າວໄທໄດ້ໃຫ້ຄຳເຫັນວ່າ: ການເຮັດການຕະຫຼາດຂອງສື່ສຳຄັນຫຼາຍເພື່ອກໍ່ໃຫ້ເກີດລາຍໄດ້; ແນ່ນອນສື່ຕ້ອງມີຄຸນນະພາບທັງວິທະຍຸ-ໂທລະພາບແລະໜັງສືພິມ, ການກວດສອບແຫຼ່ງຂ່າວກໍຍິ່ງສຳຄັນຫຼາຍ ເຊິ່ງຮຽກຮ້ອງໃຫ້ນັກຂ່າວຕ້ອງມີຈັນຍາບັນ ແລະ ກວດສອບສື່ໃຫ້ເປັນສື່ທີ່ມີຄຸນນະພາບ. ຜູ້ຕາງໜ້າຈາກສຳນັກຂ່າວສານຫວຽດນາມປະຈຳລາວ ກໍໄດ້ໃຫ້ຄຳເຫັນວ່າ: ສື່ຫວຽດນາມທັງໝົດເຂົາຮ່ວມມືກັນ ແຕ່ຕ້ອງມີການແຂ່ງຂັນກັນໃນໂຕເພື່ອສ້າງລາຍຮັບ ແລະ ສ້າງໃຫ້ຜູ້ອ່ານຕິດຕາມຫຼາຍຂຶ້ນ ເພິ່ນຢໍ້າວ່າ: ຮ່ວມມືເພື່ອແຂ່ງຂັນສ້າງຄຸນນະພາບດ້ານເນື້ອໃນໃຫ້ດີຂຶ້ນ, ທັນເຫດການ.

ຫຼັງຈົບລາຍການວິທະຍາກອນບັນລະຍາຍແລ້ວ ແມ່ນເວທີເປີດໂອກາດໃຫ້ບັນດານັກຂ່າວສື່ຕ່າງໆ-ພະນັກງານອາວຸໂສ ໄດ້ສະແດງຄຳເຫັນ, ຜູ້ຂຽນເກັບກຳໄດ້ບາງປະເດັນທີ່ທ່ານ ອາຈານ ຄຳວິສັນ ແກ້ວສຸວັນ ຜູ້ຊ່ຽວຊານທີ່ປຶກສາສື່ຂອງສະພາແຫ່ງຊາດ, ນັກຂຽນນາມປາກກາ: ທິດດີ, ແນວລາວ ມີຄຳເຫັນວ່າ: ສື່ຄຸນນະພາບ ຕ້ອງການປັດໄຈສຳຄັນກວ່າໝູ່ໄປຄຽງຄູ່ກັນຄື: ນັກຂ່າວ ແລະ ບັນນາທິການ ສອງທ່ານນີ້ສຳຄັນຫຼາຍ, ມີບົດບາດສູງຄື: ນັກຂ່າວບໍ່ແມ່ນຂຽນຕາມຂໍ້ມູນຈາກເອກະສານເທົ່ານັ້ນ; ສ່ວນບັນນາທິການຍິ່ງຕ້ອງເປັນຜູ້ຮູ້ເລິກ-ຮູ້ກວ້າງ ເວົ້າໃຫ້ສັ້ນ, ບັນນາທິການຕ້ອງຮູ້ຕັ້ງບັນຫາແບບໃໝ່-ສ່ອງແສງໃຫ້ໄດ້ເນື້ອໃນຢ່າງມີຄຸນນະພາບ ໝາຍຄວາມວ່າທັງສອງທ່ານນີ້ ຕ້ອງບຸກທະລຸທາງດ້ານເນື້ອໃນເພື່ອໃຫ້ຜູ້ເສບສື່ຫັນມາບໍລິໂພກສື່ພວກເຮົາຫຼາຍຂຶ້ນຕາມສົມຄວນ. ບັນນາທິການນີ້ ບາງຄັ້ງອາດໄດ້ຂຽນຕຳພຸ້ນຊູນພີ້ແດ່ນໍ? ແຕ່ຕ້ອງໄດ້ເນື້ອໃນຄຸນນະພາບ, ຮັບປະກັນການສ່ອງແສງຖືກຕ້ອງຕາມແນວທາງຂອງພັກ-ລັດ ແລະ ກົດໝາຍ, ລະບຽບການຕ່າງໆໃນສັງຄົມ.

ສັງລວມຕອນທ້າຍ, ທ່ານສົມສະຫວາດ ພົງສາ ຫົວໜ້າກົມສື່ມວນຊົນ ໄດ້ສະຫຼຸບວ່າ: ໃນຍຸກປັດຈຸບັນນີ້ ເຕັກໂນໂລຊີພັດທະນາໄວຫຼາຍ ໂດຍສະເພາະ AI ເຂົ້າມາມີບົດບາດສຳຄັນ; ສະນັ້ນ, ເຮົາຕ້ອງໄດ້ເອົາໃຈໃສ່ເນື້ອໃນທີ່ປ້ອນໃຫ້ພາຫະນະສື່ມວນຊົນ ຕ້ອງຮັບປະກັນຄົບຖ້ວນຮອບດ້ານ, ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ-ລັດ ໃນນັ້ນໃຫ້ເອົາໃຈໃສ່ການອະທິບາຍ, ຕອບໂຕ້ຂ່າວປອມ, ຂ່າວບິດເບືອນທີ່ໂປໂລຂຶ້ນຕາມໜ້າເຟສບຸກ. ທ່ານຍັງໄດ້ແນະນຳກົນໄກຄຸ້ມຄອງສື່ ກໍຄືອິນເຕີເນັດໃນລະດັບສູນກາງ ແລະ ທ້ອງຖິ່ນຕື່ມອີກ.

ກອງປະຊຸມຄັ້ງນີ້, ຜູ້ຂຽນເຫັນວ່າມີຄວາມໝາຍສຳຄັນຫຼາຍເພາະບໍ່ພຽງແຕ່ຜູ້ຕາງໜ້າຈາກສື່ໃນສູນກາງເທົ່ານັ້ນຍັງມີຜູ້ຕາງໜ້າສື່ມາຈາກຕ່າງແຂວງເຂົ້າຮ່ວມຢ່າງພ້ອມພຽງອີກດ້ວຍ, ຖືວ່າເປັນເວທີແລກປ່ຽນວິຊາການທີ່ກວ້າງຂວາງພໍສົມຄວນ.

ທັງໝົດນັ້ນຜູ້ຂຽນຄິດວ່າ: ໃນວົງການສື່, ບຸກຄົນສຳຄັນຍັງຄົງແມ່ນນັກຂ່າວ ແລະ ບັນນາທິການ ເປັນຜູ້ຈັດຕັ້ງປະຕິບັດສ້າງເນື້ອໃນປ້ອນໃຫ້ສື່, ເຖິງຈະມີການຈັດສຳມະນາຍົກລະດັບແນວໃດກໍດີ ຫາກສອງທ່ານນີ້ບໍ່ບຸກທະລຸດ້ານເນື້ອໃນແລ້ວ ຄິດວ່າສື່ພວກເຮົາກໍຍັງຄົງພົບບັນຫາຄວາມນິຍົມຈາກຜູ້ບໍລິໂພກສື່ທັງຫຼາຍຢູ່ດີ. ສະເໜີແລກປ່ຽນ!




## ຫາລື...

(ຕໍ່ຈາກໜ້າ 1)

ອົງການທີ່ກ່ຽວຂ້ອງ, ຜູ້ຕາງໜ້າ ແລະຊ່ຽວຊານຂອງອົງການຈັດຕັ້ງສາກົນ ພ້ອມດ້ວຍພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມມື້ທີ 1 ໄດ້ພິຈາລະນາຜົນໄດ້ຮັບຈາກການສຳຫຼວດແຫ່ງຊາດ ແລະ ຜົນກະທົບທາງເສດຖະກິດຂອງການແຕ່ງດອງໃນໄວເດັກ ທີ່ນຳສະເໜີໂດຍຕາງໜ້າຈາກ ກວທສ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ສະຖາບັນຄົ້ນຄວ້າວິທະຍາສາດເສດຖະກິດ-ສັງຄົມແຫ່ງຊາດ, ຂະແໜງການສຶກສາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ ໄດ້ນຳສະເໜີມາດຕະການ, ນະໂຍບາຍ ແລະແຜນງານຂອງຕົນ ໃນການປ້ອງກັນ ແລະ ແກ້ໄຂບັນຫາ ໂດຍສະເພາະເນັ້ນໃສ່ການເບິ່ງຄອບຄົວທຸກຍາກ ແລະ ເດັກຍິງທີ່ຂາດໂອກາດ; ກອງປະຊຸມໄດ້ແບ່ງກຸ່ມຄົ້ນຄວ້າ 3 ດ້ານຕົ້ນຕໍ: ນະໂຍບາຍດ້ານການສຶກສາ, ສາທາລະນະສຸກ-ໂພຊະນາການ, ແຮງງານ ແລະ ສະຫວັດດີການສັງຄົມ ເຊິ່ງຈະສະແດງໃຫ້ເຫັນເຖິງຄວາມຫ່ວງໃຍແລະຄວາມມຸ່ງໝັ້ນຂອງລັດຖະບານລາວ ໃນການແກ້ໄຂບັນຫາການແຕ່ງດອງໃນໄວເດັກຜ່ານການຮ່ວມມືລະຫວ່າງຂະແໜງການຕ່າງໆ ແລະ ອົງການສາກົນ.

ກອງປະຊຸມໃນມື້ທີ 2 ໄດ້ຮັບຟັງການລາຍງານຮ່າງສັງລວມຄວາມໝາຍໝັ້ນແລະທິດທາງໃນການຕິດຕາມແກ້ໄຂບັນຫາການແຕ່ງງານໃນໄວເດັກ ຢູ່ ສປປລາວ ພ້ອມຮັບຟັງຄຳເຫັນຈາກ ສສຊ ແລະ ຜູ້ເຂົ້າຮ່ວມ, ໂດຍການເປັນປະທານກອງປະຊຸມຮ່ວມກັນຂອງທ່ານນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ທ່ານ ນາງ ມາກາລີ ໂຣເມເດນນ໌ (Magali Romedenne) ຮອງຜູ້ຕາງໜ້າອົງການ UNICEF.

ທ່ານ ຊີມອນເນ ບົວສີ ຊ່ຽວຊານແຜນງານ ແລະ ການຕິດຕາມ, ອົງການ UNICEF ໄດ້ນຳສະເໜີແຜນການຮ່ວມມືລະຫວ່າງອົງການ ກັບ ລັດຖະບານສປປລາວປີ2026-2031; ພ້ອມກັນນັ້ນ, ຕາງໜ້າຈາກອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA) ໄດ້ສະເໜີແຜນງານລົງທຶນພາກພື້ນດ້ານການຖືພາ ແລະ ການແຕ່ງດອງໃນໄວເດັກ, ພ້ອມຊີ້ໃຫ້ເຫັນບຸລິມະສິດແລະຄວາມໝັ້ນໝາຍຂອງລັດຖະບານໃນການສະໜອງງົບປະມານພັດທະນາໄວໜຸ່ມ; ຕາງໜ້າຈາກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ນຳສະເໜີບົດສະເໜີກ່ຽວກັບຍຸດທະສາດແລະແຜນການພັດທະນາໄວໜຸ່ມແຫ່ງຊາດ ປີ 2021-2030. ໃນພາກສົນທະນາລວມ, ຜູ້ເຂົ້າຮ່ວມໄດ້ອະທິບາຍ ແລະ ແລກປ່ຽນຄຳເຫັນກ່ຽວກັບບົດບາດຂອງສສຊໃນການສົ່ງເສີມການພັດທະນາຂີດຄວາມສາມາດຂອງໄວໜຸ່ມ, ການສົ່ງ ເສີມການມີສ່ວນຮ່ວມໃນວຽກງານສ້າງສາປະເທດ ແລະ ການຈັດສັນງົບປະມານພາຍໃນເພື່ອສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມ.

ກອງປະຊຸມທີ່ໄດ້ດຳເນີນມາເປັນເວລາ 3 ວັນ ໄດ້ປິດລົງດ້ວຍຜົນສຳເລັດ ໂດຍການເປັນປະທານຮ່ວມຂອງທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ທ່ານ ດຣ. ເທັດ ລິນນ໌ (Thet Lynn) ຜູ້ອຳນວຍການອົງການເພື່ອສຸຂະພາບ ແລະ ຫຼຸດຜ່ອນຄວາມທຸກຍາກ (HPA).

ກອງປະຊຸມໃນມື້ສຸດທ້າຍ ໄດ້ເລີ່ມຕົ້ນດ້ວຍການປະກອບຄຳເຫັນຈາກຜູ້ແທນອົງການ HPAແລະອະທິການບໍດີມະຫາວິທະຍາໄລແພດສາດ. ໃນພາກທຳອິດ ໄດ້ມີການນຳສະເໜີກ່ຽວກັບຜົນສຳເລັດຂອງວຽກງານຮັກສາສຸຂະພາບຂັ້ນຕົ້ນ ໂດຍສະເພາະການປ້ອງກັນພະຍາດດ້ວຍວັກຊີນ; ຈາກນັ້ນ, ພາກທີສອງໄດ້ມີການແລກປ່ຽນປະສົບການດ້ານການເງິນສາທາລະນະສຸກ ແລະ ວິທີການຈັດການງົບປະມານການຊື້ວັກຊີນ; ຕໍ່ມາ, ຜູ້ເຂົ້າຮ່ວມໄດ້ແບ່ງກຸ່ມກັນສົນທະນາກ່ຽວກັບບົດບາດຂອງ ສພຊ ໃນການເພີ່ມງົບປະມານດ້ານສາທາລະນະສຸກຂັ້ນຕົ້ນ ແລະວຽກງານສັກຢາກັນພະຍາດ; ພາກສຸດທ້າຍ, ສສຊ ໄດ້ແລກປ່ຽນຄວາມຄິດເຫັນກ່ຽວກັບນະໂຍບາຍ ແລະຄວາມສຳຄັນຂອງການລົງທຶນດ້ານສາທາລະນະສຸກ ແລະ ວັກຊີນ.

ໃນພິທີປິດ, ປະທານ ກວທສ ໄດ້ກ່າວສະແດງຄວາມຂອບໃຈຢ່າງສູງຕໍ່ບັນດາສຳມະນາກອນ, ວິທະຍາກອນ, ຜູ້ຊ່ຽວຊານຈາກຕ່າງປະເທດ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າ ຈົນເຮັດໃຫ້ກອງປະຊຸມຄັ້ງນີ້ມີເນື້ອໃນຄົບຖ້ວນ ແລະ ບັນລຸຜົນຕາມເປົ້າໝາຍ; ພ້ອມກັນນີ້, ທ່ານຍັງເນັ້ນວ່າ ບັນຫາການແຕ່ງດອງໃນໄວເດັກ ຍັງຄົງເປັນສິ່ງທ້າທາຍທີ່ເພີ່ມຂຶ້ນ ໂດຍສະເພາະໃນໄລຍະການລະບາດຂອງພະຍາດໂຄວິດ-19 ເຊິ່ງສົ່ງຜົນກະ ທົບໂດຍກົງຕໍ່ການພັດທະນາຊັບພະຍາກອນມະນຸດຂອງຊາດ. ທ່ານໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມ ນຳເອົາເນື້ອໃນ ແລະ ບົດຮຽນທີ່ໄດ້ຈາກກອງປະຊຸມ ໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ, ສືບຕໍ່ປະສານງານກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ, ແລະ ຮຽກຮ້ອງໃຫ້ອົງການຈັດຕັ້ງສາກົນເຊັ່ນ: UNICEF, UNFPA ແລະ HPA ສືບຕໍ່ໃຫ້ການສະໜັບສະໜູນ ສປປລາວ ໃນວຽກງານວັດທະນະທຳ-ສັງຄົມ.

ກອງປະຊຸມໄດ້ສຳເລັດລົງດ້ວຍຄວາມຍິນດີແລະຄວາມຫວັງໃນການແກ້ໄຂບັນຫາການແຕ່ງດອງກ່ອນໄວອັນຄວນແລະການພັດທະນາໄວໜຸ່ມ ຢ່າງມີປະສິດທິຜົນໃນອະນາຄົດ; ກອງປະຊຸມຄັ້ງນີ້ ໄດ້ຮັບງົບປະມານຊ່ວຍເຫຼືອຂອງອົງການUNICEF, UNFPA ແລະ HPA ເຊິ່ງຈັດຂຶ້ນທີ່ທ່າລາດ, ແຂວງວຽງຈັນ ໃນລະຫວ່າງວັນທີ 1-3 ກັນຍາ 2025 ໂດຍມີຜູ້ເຂົ້າຮ່ວມຫຼາຍກວ່າ 110 ທ່ານ.

**(ກຳມາທິການວັດທະນະທຳ-ສັງຄົມ)**



## ສຸກສະບາຍຫາຍໂຣຄາ

# ວິທີເລືອກກິນອາຫານຕາມກຸ່ມເລືອດ

# ຮຽບຮຽງໂດຍ: ທິວກະທິ



**ກຸ່ມ A:** ຄວນກິນອາຫານເຈ ເພາະວ່າຄົນກຸ໊ບ A ກິນຊີ້ນໜ້ອຍທີ່ສຸດ ເນື່ອງຈາກມີກົດໃນກະເພາະອາຫານຕ່ຳ ຕ້ອງກິນປະເພດປາເພື່ອຊ່ວຍເສີມສ້າງໂປຣຕີນ ແລະ ປະເພດຜັກຈະດີທີ່ສຸດ ໂດຍສະເພາະແມ່ນຜັກບົ່ວ ແລະ ຫົວຜັກທຽມ ທີ່ມີສານຕ້ານອະນຸມູນອິດສະຫຼະ carotene, ຜັກບົ້ງ, ຜັກຫົມ ແລະ ຜັກທຽມ ຊ່ວຍກະຕຸ້ນພູມຕ້ານທານ; ກິນໝາກໄມ້ເກືອບທຸກຊະນິດ ຍົກເວັ້ນໝາກໂມ, ໝາກອຶ, ໝາກມ່ວງ, ໝາກຫຸ່ງ, ໝາກກ້ວຍ, ໝາກກ້ຽງ ເພາະວ່າມັນຍ່ອຍຍາກສຳລັບຄົນກຸ໊ບເລືອດເອ; ຄວນດື່ມຊາສະໝຸນໄພຈະເພີ່ມກົດໃນກະເພາະອາຫານໄດ້ເປັນຢ່າງດີ ແລະ ນົມຖົ່ວເຫຼືອງ, ນົມແບ້, ນົມສົ້ມ, ໂຍເກີດທີ່ມີໄຂມັນຕ່ຳແທນນົມງົວ ແຕ່ຄວນຫຼີກລ່ຽງເບຍ ແລະ ນ້ຳອັດລົມ.

**ກຸ່ມ B:** ກຸ໊ບນີ້ສາມາດກິນທັງຊີ້ນ ແລະ ຜັກ ແຕ່ຕ້ອງກິນໃນປະລິມານທີ່ເໝາະສົມ ເພາະເປັນໝວດເລືອດທີ່ຕຸ້ຍງ່າຍ ອາຫານຂອງຄົນກຸ໊ບເລືອດ B ແມ່ນຊີ້ນແກະ, ຊີ້ນແບ້, ຜັກທຽມ, ຈຳພວກປາ, ກະລ່ຳປີ, ບ໋ອກໂຄລີ, ຂີງ, ຂີ້ໝິ້ນ, ຫົວຜັກບົ່ວ, ຫົວຜັກບົ່ວນ້ອຍ, ກະທຽມ, ໝາກນັດ, ລູກພັບ, ໝາກອາງຸ່ນ, ໝາກໂມ, ໝາກນາວ, ໝາກເຊີຣີ, ນ້ຳມັນມະກອກ, ໝາກສະໝອງລີງ, ຊາຂຽວ, ໂຍເກີດ.

**ກຸ່ມ AB:** ກຸ່ມນີ້ແມ່ນປະສົມຂອງກຸ່ມ A ແລະ B ສະນັ້ນ, ອາຫານທີ່ຄວນຮັບປະທານກໍມີຄວາມຄ້າຍຄືກັນ ເຊັ່ນ: ຈຳພວກປາ, ກະລ່ຳປີ, ກະລ່ຳປີດອກ, ບ໋ອກໂຄລີ, ຜັກທຽມ, ຂີງ, ຂີ້ໝິ້ນ, ຜັກບົ່ວ, ຫົວຜັກບົ່ວນ້ອຍ, ເຊີຣີ, ໝາກເລັ່ນ, ໝາກນາວ, ໝາກນັດ, ໝາກອາງຸ່ນ, ຖົ່ວເຫຼືອງ, ໝາກສະໝອງລີງ, ນ້ຳມັນມະກອກ, ຊາຂຽວ ແລະ ນົມສົ້ມ.

**ກຸ່ມ O:** ສາຍຕ່ອນຕ້ອງເປັນຂອງກຸ໊ບນີ້ຢ່າງແນ່ນອນເພາະວ່າຄົນກຸ໊ບໂອ ຈະມີກົດໃນກະເພາະອາຫານຫຼາຍ ຈຶ່ງສາມາດສາມາດຍ່ອຍປະເພດຊີ້ນດີກ່ວາກຸ໊ບອື່ນໆແຕ່ຄົນໃນກຸ່ມນີ້ກໍຕຸ້ຍງ່າຍເຊັ່ນດຽວກັນດັ່ງນັ້ນ, ຄວນຫຼີກລ່ຽງອາຫາດທີ່ມີທາດແປ້ງເຊັ່ນ: ເຂົ້າ, ແປ້ງ, ນ້ຳຕານ, ລວມທັງຖົ່ວຊະນິດຕ່າງໆ ແລະ ອາຫານທີ່ຄວນຮັບປະທານເລື້ອຍໆແມ່ນ ຊີ້ນງົວ, ເຂົ້າໜົມປັງ, ຈຳພວກປາ, ໝາກຫຸ່ງ, ຜັກຫົມ, ບ໋ອກໂຄລີ, ສາລ່າຍທະເລ, ເຊີຣີ, ບູເບີຣີ, ໝາກນັດ, ຊາຂຽວ, ນ້ຳມັນມະກອກ, ຜັກທຽມ, ຂີງ, ຂີ້ໝິ້ນ, ຫົວຜັກບົ່ວ, ຜັກບົ່ວ ແລະ ໝາກສະໝອງລີງ.

**ແຫຼ່ງຂໍ້ມູນ:**
**www.thairath.co.th**

---

### ອາດ ກະວີລາວ

# ຮູ້ໜ້າ... ບໍ່ຮູ້ໃຈ

**# ຫຼານເຈົ້ານ້ອຍ**

❈ ຕໍ່ໜ້າສັງຊ່າງເວົ້າ
ໝົດອ້ອຍຕານໃນສວນ
ບໍ່ໄດ້ມີຄຳເວົ້າ
ບໍ່ໄດ້ຫວັງມຸ່ງຮ້າຍ
ຈາຈ່າຍຄຳຫວານ
ຖອກເທໂຮມໃຫ້
ຮຸນແຮງແທງທົ່ງ
ໝາຍຂ້າຂົ່ມກັນ

❈ ພໍຫັນຫຼັງປິ່ນຂ້າງ
ເໝືອນດັ່ງເປັນສັດຕູ
ມີແຕ່ຄວາມຄຳຮ້າຍ
ເໜັນສາບຄາວກວ່າຂີ້
ວາງທ່າຊິງຊັງ
ຕໍ່ກັນນານລ້ຳ
ໂຊມຊາມປະນາມດ່າ
ຕຶງໜ້າໝື່ນກອງ

❈ ນີ້ນໍ ເຂົາວ່າໄວ້
ຮູ້ໜ້າຕາກັນດີ
ຢູ່ນຳກັນຫຼາຍຝ້າ
ຫຼອກວ່າດີທີ່ແທ້
ຫຼາຍຊົ່ວຄົນມາ
ແຕ່ໃຈ ມິເຫັນຮູ້
ຫຼາຍປີດົດອກ
ກໍຊາມຊ້າກວ່າໝາ

❈ ຄົນທີ່ຮຽມວ່ານີ້
ໃນສັງຄົມຄົນເມືອງ
ບໍ່ແມ່ນແນວຫາເວົ້າ
ມີຢູ່ຫຼວງຫຼາຍ
ໃຫຍ່ໂຕຈະເລີນກ້າວ
ໂລເລລວງລ່າຍ

❈ ບໍ່ໄດ້ໝາຍມຸ່ງຮ້າຍ
ໃຜບໍ່ເປັນດັ່ງດ້າມ
ຢ່າຮ້ອນໂຕໂວຍວາຍ
ໃຜຫາກເປັນຄືເວົ້າ
ກໍໃຫ້ເຮວຮີບຝ້າວ
ປະນາມປ້ອຍດ່າໃຜ
ກັນກ່າວໃນກອນ
ດ່າໝູໝາມົ້ວ
ໃນກອນໄຂຂ່າວ
ຫາທາງປິ້ນປ່ຽນນິໄສ..ເທາະເນີ!

---



## ພັກຜາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສຽມຫ້ຽນ

❈ **ຕາມ**ຂ່າວຂອງ**ໜັງສືພິມຄວາມສະຫງົບ**ໃຫ້ຮູ້ວ່າ: **ຄ່າບໍລິການ**ໃນການບໍລິການອອກ**ບັດປະຈຳຕົວ ແບບດິຈິຕອນ** ແມ່ນ **30 ພັນກີບເທົ່ານັ້ນ** ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດ (ເລີ່ມຕົ້ນ) ຢູ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ແລະ **ຈະເລີ່ມເປີດໃຫ້ບໍລິການຢ່າງເປັນທາງການ ໃນຂອບເຂດທົ່ວປະເທດໃນເດືອນຕຸລານີ້** ຊົມເຊີຍ! ພັກ-ລັດເຮົາໄດ້ກໍ່ສ້າງ ລະບົບໃໝ່ທັນສະໄໝ ທັນສັງຄົມໄປເປັນ ຍຸກດິຈິຕອນ ອອກແບບມາຄອງຄຸ້ມ ພົນລະເມືອງແບບໃໝ່ ເພື່ອປອງປະຊາພີ່ນ້ອງ ຊົມໃຊ້ທົ່ວເຖິງກັນ **ນັ້ນແລ້ວ!**

❈ **ຜ່ານ**ພົ້ນໄປ**ບຸນຫໍ່ເຂົ້າສະຫຼາກ** ຕໍ່ໄປກໍກະກຽມໃຫ້**ອັບບຸນອອກພັນສາ** ແລະ **ບຸນຊ່ວງເຮືອ** ເຊິ່ງຫຼາຍທ້ອງຖິ່ນກໍໄດ້ມີການກະກຽມຢ່າງພົດພື້ນ ມີການຕົບແຕ່ງເອ້ ປະດັບລວດລາຍງາມຕາມອາຄານຫໍໂຮງ ເດີ່ນອາຮາມກວ້າງທັງກະກຽມຊຽນແຕ້ມ ໂຄງກອນການຮ່າຍ ເອົາໄວ້ເສີ້ງສົ່ງແຮງໃຈພວກອ້າຍ ສີພາຍໂກ້ຍ່າອ່ອນແຮງ **ເຈົ້າເອີຍ!**

### 🤗 ຊວນຍິ້ມ 🤗

# ພົ້ງດຶ່ງ

## ເລື່ອງ: ຮັກແທ້ແພ້ໂກຊິດ

ຍ່າກັບຫຼານນັ່ງລົມກັນ, ຍ່າໄດ້ເລົ່າເຖິງສະໄໝອະດີດ

**ຍ່າ:** ຕອນສະໄໝຍ່າຍັງເປັນສາວ, ຍ່າມີຜູ້ບ່າວເປັນທະຫານປະຈຳຢູ່ເຂດຊາຍແດນ; ສະນັ້ນ, ຈຶ່ງໄດ້ຂຽນຈົດໝາຍຫາກັບເອົາ ເພາະບໍ່ມີໂທລະສັບຄືດຽວນີ້

**ຫຼານ:** ສະແດງວ່າປູ່ຫຼານເຄີຍເປັນທະຫານຫວາ!

**ຍ່າ:** ບໍ່... ປູ່ມຶງເປັນຄົນສົ່ງຈົດໝາຍ!!!



### ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ຊ້າງຊິຕາຍ ຫາວຫາເຄືອ
ເສືອຊິຕາຍ ຫາວຫາໄມ້
ຍາມເມື່ອຄົນເຈັບປ່ວຍໄຂ້ ຊິຫາວຫາເຄືອຫາໄມ້ບໍ່ທ່ອນຄື

ລັດຖະສະພາຕ່າງປະເທດ

## ລັດຖະສະພາຝ່າຍຕາເວັນອອກຂອງລີບີ ອະນຸມັດກົດໝາຍໜີ້ສິນສາທາລະນະ



(Xinhua) - ອັບດຸລລາ ເບລຮິກ (Abdullah Blehig) ໂຄສົກສະພາຜູ້ແທນປະຊາຊົນ ຫຼືລັດຖະສະພາຂອງລີບີຝ່າຍຕາເວັນອອກ ຖະແຫຼງຜ່ານເຟສບຸກວ່າ: ສະພາໄດ້ອະນຸມັດກົດໝາຍໜີ້ສາທາລະນະ ໃນລະຫວ່າງກອງປະຊຸມຄົບຄະນະທີ່ເມືອງເບງກາຊີ(Benghazi)ເມື່ອວັນອັງຄານທີ 19 ສິງຫາຜ່ານມາ; ການອະນຸມັດດັ່ງກ່າວ ເກີດຂຶ້ນຫຼັງຈາກການອະພິປາຍຢ່າງກວ້າງຂວາງ ແລະ ໄດ້ຮວມເອົາຂໍ້ສະເໜີແນະຈາກກຳມາທິການການເງິນຂອງລັດຖະສະພາ ມາປັບໃຊ້, ເຖິງແມ່ນວ່າສະມາຊິກສະພາບາງຄົນຈະຄັດຄ້ານບາງບົດບັນຍັດ.

ກົດໝາຍສະບັບນີ້ມີຈຸດປະສົງເພື່ອຄວບຄຸມນະໂຍບາຍການກູ້ຢືມແລະຮັບປະກັນຄວາມໂປ່ງໃສທາງດ້ານງົບປະມານ ໂດຍກຳນົດໃຫ້ສ້າງບັນຊີພິເສດເພື່ອສ້າງຄັງສຳຮອງການຊຳລະໜີ້ ແລະ ຫ້າມກູ້ຢືມບໍລິຫານທັງພາຍໃນ ແລະ ຕ່າງປະເທດ, ຍົກເວັ້ນໄດ້ຮັບອະນຸຍາດພາຍໃຕ້ບົດບັນຍັດຂອງກົດໝາຍທີ່ໄດ້ຮັບການອະນຸມັດ.

ສະຖານະການດັ່ງກ່າວ ເກີດຂຶ້ນທ່າມກາງວິກິດການເສດຖະກິດຂອງລີບີທີ່ຮ້າຍແຮງຂຶ້ນ, ໜີ້ສາທາລະນະທີ່ເພີ່ມສູງຂຶ້ນ ແລະສິ່ງທ້າທາຍທີ່ເກີດຈາກການຄຸ້ມຄອງທາງການເງິນທີ່ກະແຈກກະຈາຍຕັ້ງແຕ່ປີ 2014, ອີງຕາມແຫຼ່ງຂ່າວຂອງລັດຖະສະພາ.

ລີບີ ຍັງຄົງແບ່ງແຍກນັບຕັ້ງແຕ່ການລຸກຮືຂຶ້ນໃນປີ2011 ທີ່ໄດ້ຮັບການໜູນຫຼັງຈາກນາໂຕ ເຊິ່ງໂຄ່ນລົ້ມອະດີດຜູ້ນຳ ມູອຳມາຣ໌ ກັດດາຟີ (Muammar Gaddafi), ໂດຍແຕກແຍກອອກເປັນ 2 ຝ່າຍຄື: ລັດຖະບານເອກະພາບແຫ່ງຊາດ ໃນນະຄອນຫຼວງຕຣີໂປລີ (Tripoli) ທີ່ໄດ້ຮັບການຮັບຮອງຈາກສະຫະປະຊາຊາດ ແລະ ລັດຖະບານຝ່າຍຕາເວັນອອກ ທີ່ໄດ້ຮັບການສະໜັບສະໜູນຈາກກອງທັບແຫ່ງຊາດລີບີ ພາຍໃຕ້ຜູ້ບັນຊາການ ຄາລີຟາ ຮາຟຕາຣ໌ (Khalifa Haftar).

## ສີລັງກາ ຜ່ານກົດໝາຍການພະນັນສະບັບໃໝ່ ເພື່ອຄວບຄຸມຄາສິໂນ ແລະ ຕ້ານການຟອກເງິນ




(Xinhua) - ວັນທີ 19 ສິງຫາຜ່ານມາ, ລັດຖະສະພາສີລັງກາ ໄດ້ຜ່ານຮ່າງກົດໝາຍທີ່ໃຫ້ຂໍ້ກຳນົດສຳລັບການສ້າງຕັ້ງອົງການຄຸ້ມຄອງການພະນັນ (Gambling Regulatory Authority) ທີ່ມີການປັບປຸງເພີ່ມຕື່ມ.

ອົງການຄຸ້ມຄອງການພະນັນມີອຳນາດໃນການຄວບຄຸມການພະນັນທຸກຮູບແບບ ລວມທັງຄາສິໂນ.

ອົງການນີ້ ມີອຳນາດກວ້າງຂວາງ ລວມທັງການເກັບລາຍຮັບທີ່ກ່ຽວຂ້ອງກັບການພະນັນ,ການຮັບປະກັນຄວາມໂປ່ງໃສ ແລະ ການປົກຄອງທີ່ດີໃນການດຳເນີນງານດ້ານການພະນັນ, ແລະ ການສະກັດກັ້ນກິດຈະກຳການພະນັນທີ່ຜິດກົດໝາຍ.

ອານິລ ຈາຢັນທາ ເຟີຣ໌ນັນໂດ (Anil Jayantha Fernando) ຮອງລັດຖະມົນຕີກະຊວງພັດທະນາເສດຖະກິດ ກ່າວໃນລັດຖະສະພາວ່າ: ກົດໝາຍສະບັບນີ້ ຍັງຊ່ວຍແກ້ໄຂຄວາມເປັນຫ່ວງກ່ຽວກັບການຟອກເງິນອີກດ້ວຍ.

## Zanzibar ປະກາດກຳນົດການເລືອກຕັ້ງທົ່ວໄປ, ການປ່ອນບັດລ່ວງໜ້າ ເລີ່ມວັນທີ 28 ຕຸລາ



(Xinhua) - ວັນທີ 18 ສິງຫາຜ່ານມາ, ຄະນະກຳມະການເລືອກຕັ້ງແຊນຊິບາຣ໌(Zanzibar Electoral Commission - ZEC) ຂອງສະຫະສາທາລະນະລັດຕັງຊານີ ໄດ້ເປີດເຜີຍຕາຕະລາງເວລາຢ່າງເປັນທາງການຂອງການເລືອກຕັ້ງທົ່ວໄປປີ2025, ໂດຍປະກາດວ່າ ການປ່ອນບັດລ່ວງໜ້າຈະຈັດຂຶ້ນໃນວັນທີ28 ຕຸລາ ແລະ ການເລືອກຕັ້ງທົ່ວໄປໃນວັນທີ 29 ຕຸລາ; ນີ້ເປັນຄັ້ງທີສອງໃນປະຫວັດສາດຂອງແຊນຊິບາຣ໌ ທີ່ການລົງຄະແນນສຽງລ່ວງໜ້າຈະຈັດຂຶ້ນໜຶ່ງວັນກ່ອນການເລືອກຕັ້ງທົ່ວໄປເຊິ່ງຄັ້ງທຳອິດເກີດຂຶ້ນໃນປີ2020.

ອີງຕາມຖະແຫຼງການຂອງ ZEC, ການລົງຄະແນນສຽງລ່ວງໜ້າ ຈະດຳເນີນການຕາມມາດຕາ82ຂອງກົດໝາຍການເລືອກຕັ້ງ ສະບັບປີ 2018 ໂດຍມີຜູ້ມີສິດເລືອກຕັ້ງທີ່ປະກອບດ້ວຍຜູ້ຄວບຄຸມການເລືອກຕັ້ງ, ຜູ້ຈັດການໜ່ວຍປ່ອນບັດ, ເຈົ້າໜ້າທີ່ຕຳຫຼວດປະຈຳການ, ຄະນະກຳມະການ ແລະ ພະນັກງານຂອງ ZEC ລວມທັງຜູ້ມີສິດເລືອກຕັ້ງທີ່ໄດ້ຮັບມອບໝາຍໃຫ້ປະຕິບັດໜ້າທີ່ຮັກສາຄວາມປອດໄພໃນວັນເລືອກຕັ້ງ.

ຄະນະກຳມະການກ່າວວ່າ ການເກັບກຳແບບຟອມການສະເໜີຊື່ ດຳເນີນແຕ່ວັນທີ 28 ສິງຫາ - 10 ກັນຍາ, ກຳນົດວັນຮັບສະໝັກຜູ້ສະໝັກຮັບເລືອກຕັ້ງແມ່ນວັນທີ 11 ກັນຍາ ໂດຍໄລຍະການໂຄສະນາຫາສຽງຈະເລີ່ມໃນວັນດຽວກັນ ແລະ ສິ້ນສຸດໃນວັນທີ 27 ຕຸລາ, ການນັບຄະແນນສຽງ ແລະ ການປະກາດຜົນຈະດຳເນີນໃນລະຫວ່າງວັນທີ 29 ຕຸລາ - 1 ພະຈິກ.

ZEC ຍັງໃຫ້ຄຳໝັ້ນສັນຍາຈະສ້າງສະພາບແວດລ້ອມການລົງຄະແນນສຽງທີ່ກວມເອົາຄົນພິການ ເຊິ່ງເປັນຄັ້ງທຳອິດທີ່ຄະນະກຳມະການ ໄດ້ບັນທຶກ ແລະ ລົງທະບຽນຜູ້ມີສິດເລືອກຕັ້ງທີ່ມີຄວາມພິການໄວ້ໃນທະບຽນລາຍຊື່ຜູ້ມີສິດເລືອກຕັ້ງ.

(Zanzibar ເປັນໝູ່ເກາະຂອງຕັງຊານີ, ຢູ່ນອກຊາຍຝັ່ງຂອງອາຟຣິກາຕາເວັນອອກ)

## ສະພາແຫ່ງຊາດ ສ.ເກົາຫຼີ ຜ່ານກົດໝາຍ ຫ້າມໃຊ້ໂທລະສັບມືຖືໃນຫ້ອງຮຽນ

(The Korea Herald) - ເລີ່ມແຕ່ເດືອນມີນາ 2026 ເປັນຕົ້ນໄປ, ນັກຮຽນ ສ.ເກົາຫຼີ ຈະຖືກຫ້າມບໍ່ໃຫ້ໃຊ້ໂທລະສັບມືຖືໃນລະຫວ່າງຮຽນ ພາຍໃຕ້ກົດໝາຍສະບັບໃໝ່ທີ່ຜ່ານສະພາແຫ່ງຊາດເມື່ອວັນພຸດທີ 27 ສິງຫາຜ່ານມາ.

ມາດຕະການນີ້ ນຳໃຊ້ກັບໂຮງຮຽນປະຖົມ ແລະ ມັດທະຍົມ, ເຖິງແມ່ນວ່າມີຂໍ້ຍົກເວັ້ນໃນກໍລະນີທີ່ມີການໃຊ້ອຸປະກອນດັ່ງກ່າວເພື່ອຈຸດປະສົງດ້ານການສຶກສາ ຫຼື ກໍລະນີສຸກເສີນ ໂດຍຕ້ອງໄດ້ຮັບການອະນຸມັດຈາກເຈົ້າໜ້າທີ່ໂຮງຮຽນ ຫຼື ຄູ.

ກົດໝາຍສະບັບນີ້ຈະມີຜົນສັກສິດໃນວັນທີ 1 ມີນາ 2026, ໜຶ່ງວັນກ່ອນເປີດພາກຮຽນໃໝ່.

ການປັບປຸງບາງເນື້ອໃນຂອງກົດໝາຍການສຶກສາຊັ້ນປະຖົມ ແລະ ມັດທະຍົມ ຜ່ານດ້ວຍຄະແນນເຫັນດີ 115 ສຽງ, ຄັດຄ້ານ 31 ສຽງ ແລະ ງົດອອກສຽງ 17 ສຽງ ຈາກສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ 163 ຄົນ (ສະພາແຫ່ງຊາດ ມີສະມາຊິກທັງໝົດ 300 ທີ່ນັ່ງ).

ກະຊວງສຶກສາທິການ ກ່າວວ່າ ການປັບປຸງດັ່ງກ່າວ ເປັນພື້ນຖານທາງກົດໝາຍ ເພື່ອຈຳກັດການນຳໃຊ້ ແລະ ການຄອບຄອງອຸປະກອນອັດສະລິຍະ ເພື່ອປົກປ້ອງສິດໃນການຮຽນຮູ້ຂອງນັກຮຽນ ແລະ ປົກປ້ອງຄວາມສາມາດໃນການສິດສອນຂອງຄູ.



# ລັດຖະສະພາອິນເດຍ ຜ່ານຮ່າງກົດໝາຍ ຫ້າມເກມອອນລາຍທີ່ກ່ຽວຂ້ອງກັບເງິນ




(Xinhua) - ຮ່າງກົດໝາຍສົ່ງເສີມ ແລະ ຄວບຄຸມເກມອອນລາຍ ປີ 2025 ໂດຍຫ້າມການໃຫ້ບໍລິການເກມພະນັນອອນລາຍ, ການໂຄສະນາ ແລະ ທຸລະກຳທາງການເງິນທີ່ກ່ຽວຂ້ອງກັບເກມເຫຼົ່ານີ້; ຮ່າງກົດໝາຍສະບັບນີ້ ໄດ້ຮັບການອະນຸມັດຢູ່ສະພາສູງໃນວັນພະຫັດທີ 21 ສິງຫາຜ່ານມາ ໂດຍບໍ່ມີການການອະພິປາຍ ທ່າມກາງການປະທ້ວງ ແລະ ໄດ້ຮັບການອະນຸມັດຈາກສະພາຕໍ່າເມື່ອວັນພຸດ.

ຮ່າງກົດໝາຍດັ່ງກ່າວຍັງຫ້າມການໂຄສະນາທີ່ກ່ຽວຂ້ອງກັບເກມການພະນັນອອນລາຍ ແລະ ຫ້າມທະນາຄານ ແລະ ສະຖາບັນການເງິນ ອຳນວຍຄວາມສະດວກ ຫຼື ໂອນເງິນ ສຳລັບເກມດັ່ງກ່າວ.

ຜູ້ຊ່ຽວຊານກ່າວວ່າ ຜູ້ຄົນນິຍົມຫຼິ້ນເກມພະນັນອອນລາຍໂດຍການຝາກເງິນ ເພື່ອຄາດຫວັງວ່າຈະໄດ້ຮັບຜົນຕອບແທນທີ່ສູງຂຶ້ນ.

ກົດໝາຍສະບັບນີ້ ມີເປົ້າໝາຍທີ່ຈະເຮັດໃຫ້ເກມພະນັນອອນລາຍເພື່ອເງິນຖືກລົງໂທດຈຳຄຸກສູງສຸດ 3 ປີ ແລະ/ຫຼື ປັບໃໝສູງສຸດ 10 ລ້ານຣູປີ (114,600 ໂດລາ).

"ການຕິດເກມພະນັນອອນລາຍເພື່ອເງິນ ກໍຄືກັບການຕິດຢາເສບຕິດ. ຜູ້ມີອິດທິພົນທີ່ຢູ່ເບື້ອງຫຼັງເກມພະນັນອອນລາຍເພື່ອເງິນ ຈະຄັດຄ້ານຄຳຕັດສິນຂອງສານ, ພວກເຂົາຈະໂຄສະນາຜ່ານສື່ສັງຄົມເພື່ອຕໍ່ຕ້ານການຫ້າມນີ້; ພວກເຮົາໄດ້ເຫັນຜົນກະທົບຂອງເກມການພະນັນແລ້ວ" ອັດສະວິນີ ໄວສະຍໍ (Ashwini Vaishnaw) ລັດຖະມົນຕີກະຊວງເອເລັກໂຕຣນິກ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ຂອງລັດຖະບານກາງອິນເດຍ ກ່າວໃນຂະນະທີ່ສະເໜີຮ່າງກົດໝາຍຢູ່ສະພາສູງ.

ລັດຖະບານອິນເດຍເປີດເຜີຍຂໍ້ມູນວ່າ ປະມານ 450 ລ້ານຄົນໃນທົ່ວປະເທດ ໃຊ້ບໍລິການພະນັນອອນລາຍ, ສູນເສຍເງິນມູນຄ່າຮວມກັນຫຼາຍກວ່າ 2.3 ຕື້ໂດລາຕໍ່ປີ.

ຢ່າງໃດກໍຕາມ, ກົດໝາຍຈະຍົກເວັ້ນໃຫ້ກັບການແຂ່ງຂັນເກມທາງກິລາ (e-sport) ແລະ ເກມເພື່ອການສຶກສາ, ໂດຍພາກລັດຈະສົ່ງເສີມກິດຈະກຳທັງສອງແບບ ເປັນສ່ວນໜຶ່ງຂອງເສດຖະກິດດິຈິຕອນ.

ຂະນະທີ່ບັນດາບຸກຄົນໃນວົງການອຸດສາຫະກຳທີ່ກ່ຽວຂ້ອງຂອງອິນເດຍ ໄດ້ສະແດງຄວາມຄິດເຫັນທີ່ຄ້າຍຄືກັນວ່າ ລັດຖະບານຄວນໃຊ້ມາດຕະການຄວບຄຸມຢ່າງເຂັ້ມງວດ ແລະ ເກັບພາສີ ຫຼາຍກວ່າການຫ້າມທັງໝົດເຊັ່ນນີ້, ເນື່ອງຈາກອິນເດຍ ຖືເປັນໜຶ່ງໃນປະເທດທີ່ມີອຸດສາຫະກຳເກມ ແລະ ກິລາອອນລາຍຂະໜາດໃຫຍ່ທີ່ສຸດໃນໂລກ ແລະ ເຕືອນວ່າ ການອອກກົດໝາຍແບບນີ້ ອາດຊຸກດັນໃຫ້ປະຊາຊົນໄປສູ່ເວທີທີ່ຜິດກົດໝາຍ ແລະ ຈະເປັນການສົ່ງ ເສີມທາງອ້ອມໃຫ້ກັບອຸດສາຫະກຳເງິນຄຣິບໂຕ (cryptocurrency).

ໃນວັນດຽວກັນ, ລັດຖະບານໄດ້ສະເໜີຮ່າງກົດໝາຍປົດນັກການເມືອງລະດັບສູງອອກຈາກຕຳແໜ່ງຫາກພວກເຂົາຖືກຈັບກຸມ ແລະ ຈຳຄຸກເປັນເວລາ 30 ວັນ ເຊິ່ງຝ່າຍຄ້ານເອີ້ນວ່າເປັນ "ຄວາມພະຍາຍາມທີ່ໜ້າຢ້ານ" ທີ່ຈະຍົກເລີກການຄຸ້ມຄອງຕາມລັດຖະທຳມະນູນ.

ອາມິດ ຊາ (Amit Shah) ລັດຖະມົນຕີກະຊວງພາຍໃນ ທີ່ເປັນຜູ້ສະເໜີຮ່າງກົດໝາຍປົດຕຳແໜ່ງລັດຖະມົນຕີ ກ່າວວ່າ ລັດຖະບານຕ້ອງການເຮັດໃຫ້ "ຄຸນຄ່າຂອງຈັນຍາບັນເພີ່ມຂຶ້ນ", ຮ່າງກົດໝາຍດັ່ງກ່າວ ຈະບັງຄັບໃຫ້ນັກການເມືອງລາອອກຈາກຕຳແໜ່ງລັດຖະມົນຕີ ຫາກພວກເຂົາຖືກກັກຂັງເປັນເວລາ 1 ເດືອນ ແລະ ຖືກກ່າວຫາວ່າກະທຳຄວາມຜິດທີ່ມີໂທດຈຳຄຸກຕັ້ງແຕ່ 5 ປີຂຶ້ນໄປ.

ທາງດ້ານສະມາຄົມປະຕິຮູບປະຊາທິປະໄຕຂອງອິນເດຍ (India's Association of Democratic Reforms - ADR) ເຊິ່ງເປັນອົງການທີ່ເຮັດວຽກກ່ຽວກັບການປະຕິຮູບການເລືອກຕັ້ງ ຄຳນວນວ່າ ເກືອບເຄິ່ງໜຶ່ງຂອງສະມາຊິກສະພາຕໍ່າທີ່ໄດ້ຮັບການເລືອກຕັ້ງ 543 ຄົນ ມີຄະດີອາຍາຕິດຕົວ ໂດຍ 170 ໃນຈຳນວນ 215 ຄະດີ ມີການຕັ້ງຂໍ້ກ່າວຫາທີ່ຮ້າຍແຮງ ບໍ່ວ່າຈະເປັນການຂົ່ມຂືນ, ການຄາດຕະກຳ, ການພະຍາຍາມຄາດຕະກຳ ແລະ ການລັກພາຕົວ.

ແນວໃດກໍດີ, ນັກການເມືອງບາງຄົນກ່າວເຕືອນວ່າ ຮ່າງກົດໝາຍສະບັບນີ້ຖືເປັນ "ຄວາມພະຍາຍາມທີ່ໜ້າຢ້ານ" ໃນການສ້າງກົດລະບຽບທີ່ຈະປິດກັ້ນການກວດສອບຂອງຝ່າຍຕຸລາການ, ຍົກເລີກການຄຸ້ມຄອງຕາມລັດຖະທຳມະນູນ ແລະ ຢຽບຢ່ຳສິດຂອງພົນລະເມືອງ.

# ຄະນະລັດຖະມົນຕີເຢຍລະມັນ ຜ່ານຮ່າງກົດໝາຍ "ເຂົ້າເປັນທະຫານໂດຍສະໝັກໃຈ"



(BBC) - ວັນທີ 27 ສິງຫາຜ່ານມາ, ຄະນະລັດຖະມົນຕີເຢຍລະມັນ ໄດ້ຜ່ານຮ່າງກົດໝາຍທີ່ຈະສະເໜີການເຂົ້າເປັນທະຫານໂດຍສະໝັກໃຈ ແລະ ເປີດໂອກາດໃຫ້ກັບມາໃຊ້ການເກນທະຫານພາກບັງຄັບຄືນໃໝ່, ເຊິ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມເພີ່ມທະວີການປ້ອງກັນປະເທດເພື່ອຕອບສະໜອງຄວາມກັງວົນດ້ານຄວາມໝັ້ນຄົງ.

ກະຊວງປ້ອງກັນປະເທດ ຫວັງວ່າ ໂຄງການເຂົ້າເປັນທະຫານໂດຍສະໝັກໃຈ ໄລຍະເວລາ 6 ເດືອນ ຈະຊ່ວຍເພີ່ມຈຳນວນທະຫານສຳຮອງທີ່ຜ່ານການເຝິກຊ້ອມເປັນສອງເທົ່າ ຈາກລະດັບປັດຈຸບັນປະມານ 100,000 ນາຍ ແລະ ທະຫານອາສາສະໝັກຈຳນວນໜຶ່ງ ຈະເປັນທະຫານປະຈຳການ; ເຖິງຢ່າງໃດກໍຕາມ, ຮ່າງກົດໝາຍສະບັບນີ້ ມີທ່າອຽງທີ່ຈະປະສົບກັບຄວາມຫຍຸ້ງຍາກໃນລັດຖະສະພາ ເຊິ່ງຖືເປັນການທົດສອບຄຳໝັ້ນສັນຍາຂອງເຢຍລະມັນ ໃນການເພີ່ມທະວີການປ້ອງກັນປະເທດທ່າມກາງໄພຂົ່ມຂູ່ດ້ານຄວາມໝັ້ນຄົງທີ່ເພີ່ມຂຶ້ນ.

ເຖິງວ່າເຢຍລະມັນໄດ້ໂຈະການເກນທະຫານພາກບັງຄັບ ເມື່ອປີ 2011, ແຕ່ຕັ້ງແຕ່ນັ້ນເປັນຕົ້ນມາ ປະເທດກໍປະສົບກັບບັນຫາເພື່ອບັນລຸເປົ້າໝາຍດ້ານກຳລັງພົນ.

ບໍຣິສ ພິສໂຕຣິອຸສ (Boris Pistorius) ລັດຖະມົນຕີກະຊວງປ້ອງກັນປະເທດຕ້ອງການເພີ່ມຈຳນວນທະຫານປະຈຳການ ຈາກ 180,000 ເປັນ 260,000 ນາຍ ໃນຕົ້ນຊຸມປີ 2030 ເພື່ອບັນລຸເປົ້າໝາຍໃໝ່ຂອງອົງການສົນທິສັນຍາອັດລັງຕິກເໜືອ ຫຼື ນາໂຕ (North Atlantic Treaty Organization - NATO) ແລະ ສ້າງຄວາມເຂັ້ມແຂງດ້ານການປ້ອງກັນປະເທດ ເຊິ່ງເປັນສ່ວນໜຶ່ງຂອງແຜນການເພີ່ມການໃຊ້ຈ່າຍດ້ານການທະຫານ.

ນອກຈາກນີ້, ຮ່າງກົດໝາຍໃໝ່ຍັງຄາດການເປົ້າໝາຍການສະໝັກປະຈຳປີ ສຳລັບໂຄງການເຂົ້າເປັນທະຫານໂດຍສະໝັກໃຈ ຈະເພີ່ມຂຶ້ນຈາກ 20,000 ນາຍ ໃນປີ 2026 ເປັນ 38,000 ນາຍ ໃນປີ 2030; ຫາກເປົ້າໝາຍນີ້ບໍ່ບັນລຸ, ລັດຖະບານອາດເລືອກການເກນທະຫານພາກບັງຄັບຄືນໃໝ່ ໂດຍຕ້ອງໄດ້ຮັບການອະນຸມັດຈາກລັດຖະສະພາ.

# ຊີຣີເລື່ອນການລົງຄະແນນສຽງເລືອກຕັ້ງສະພາປະຊາຊົນ ໃນ 3 ແຂວງ ເນື່ອງຈາກເຫດຜົນດ້ານຄວາມປອດໄພ



(Xinhua) - ຄະນະກຳມະການເລືອກຕັ້ງສູງສຸດຂອງຊີຣີ ປະກາດເມື່ອວັນເສົາທີ 23 ສິງຫາຜ່ານມາວ່າ ຈະເລື່ອນການເລືອກຕັ້ງສະພາປະຊາຊົນ ໃນ 3 ແຂວງ ທີ່ກຳນົດໄວ້ໃນເດືອນກັນຍານີ້ ເນື່ອງຈາກບັນຫາດ້ານຄວາມປອດໄພ; ຄະນະກຳມະການກ່າວວ່າ ການເລືອກຕັ້ງໃນສະໄວດາ (Sweida), ຮາຊາຄາ (Hasakah) ແລະ ຣັກກາ (Raqqa) ຈະຖືກເລື່ອນອອກໄປ "ຈົນກວ່າຈະມີເງື່ອນໄຂທີ່ເໝາະສົມ ແລະ ສະພາບແວດລ້ອມທີ່ປອດໄພ", ພ້ອມເນັ້ນໜັກວ່າ ທີ່ນັ່ງໃນສະພາທີ່ຈັດສັນໃຫ້ແຂວງເຫຼົ່ານີ້ ຈະຍັງຄົງສະຫງວນໄວ້ຈົນກວ່າການລົງຄະແນນສຽງສາມາດເກີດຂຶ້ນໄດ້.

ການຕັດສິນໃຈຄັ້ງນີ້ ເນັ້ນຢໍ້າເຖິງສິ່ງທ້າທາຍຂອງອຳນາດການປົກຄອງຣັກສາການ ກຳລັງປະເຊີນຢູ່; ໜຶ່ງອາທິດກ່ອນໜ້ານີ້, ສະໄວດາ ປະເຊີນເຫດປະທະກັນລະຫວ່າງນິກາຍຢ່າງຮຸນແຮງ, ຂະນະທີ່ ຮາຊາຄາ ແລະ ຣັກກາ ຍັງຄົງມີຄວາມຜັນຜວນເນື່ອງຈາກການປາກົດຕົວຂອງກຸ່ມປະກອບອາວຸດຄູ່ແຂ່ງ ແລະ ໄພຂົ່ມຂູ່ດ້ານຄວາມໝັ້ນຄົງທີ່ຍັງຄ້າງຢູ່.

ຄະນະກຳມະການເລືອກຕັ້ງສູງສຸດຍັງໄດ້ປະກາດສ້າງຕັ້ງຄະນະກຳມະການຄວບຄຸມຂັ້ນແຂວງເພື່ອຄວບຄຸມການເລືອກຕັ້ງທີ່ຈະມາເຖິງ ເຊິ່ງເປັນຄັ້ງທຳອິດນັບແຕ່ການລົ້ມສະຫຼາຍຂອງລັດຖະບານບາຊາຣ໌ອັລ-ອັສຊາດ (Bashar al-Assad) ໃນທ້າຍປີ 2024.

ສະພາປະຊາຊົນຊີຣີເຊິ່ງເປັນສະພານິຕິບັນຍັດທີ່ມີ 250 ທີ່ນັ່ງ, ກ່ອນໜ້ານີ້ຖືກຄອບງຳໂດຍກຸ່ມທີ່ສະໜັບສະໜູນລັດຖະບານ; ອຳນາດການປົກຄອງຣັກສາການ ອ້າງວ່າ ການເລືອກຕັ້ງທີ່ຈະມາເຖິງນີ້ ມີຈຸດປະສົງເພື່ອສະແດງໃຫ້ເຫັນເຖິງຂະບວນການທາງການເມືອງທີ່ກວມລວມ ແລະ ຝ່າຍຫຼາຍຫຼາຍຂຶ້ນ.

ໃນວັນດຽວກັນ, ອັບດຸລ ກາເດີ ອັລ-ຮອສຣີ (Abdul Qader al-Hosri) ຜູ້ວ່າການທະນາຄານກາງຊີຣີ ກ່າວຕໍ່ສຳນັກຂ່າວຊານາ (SANA) ຂອງລັດ ວ່າ ຊີຣີ ຈະນຳທະນະບັດໃໝ່ມາໃຊ້ເປັນໄລຍະໆເຊິ່ງເປັນສ່ວນໜຶ່ງຂອງແຜນການປະຕິຮູບການເງິນ ແລະ ການຄັງທີ່ກວ້າງຂວາງຂຶ້ນ, ໂດຍບໍ່ໄດ້ກຳນົດວັນເປີດຕົວຢ່າງເປັນທາງການ.

ເງົ່າໄວ້ ໄດ້ຄຶດຮຽນ

❖ ວິເສດ ສະແຫວງສຶກສາ

# ຂ່າວທີ່ໜ້າສົນໃຈຈາກ ນູແວນເຊລັງ

ຄໍລຳເກົ່າເຈົ້າເດີມປະຈຳ“ຜູ້ແທນປະຊາຊົນ” ສະບັບນີ້ມີ 2 ເລື່ອງ ຈາກປະເທດນູແວນເຊລັງ ຫຼື ນິວຊີແລນ ມາເລົ່າໃຫ້ຟັງ ຄືເລື່ອງການຂະຫຍາຍຕະຫຼາດການສຶກສາ ເພື່ອສ້າງລາຍຮັບເປັນກອບເປັນກຳ ແລະ ເລື່ອງການເກັບທຳນຽມການທ່ອງທ່ຽວ ຕາມສະຖານທີ່ທ່ອງທ່ຽວຍອດນິຍົມ, ອັນນີ້ກໍແມ່ນເພື່ອເກັບເງິນເອົາໄວ້ໃຊ້ໃນການພັດທະນາແຫຼ່ງທ່ອງທ່ຽວໃຫ້ຈະເລີນເຕີບໂຕ ສົມກັບເປັນແມ່ແຮງທາງເສດຖະກິດສຳຄັນໜຶ່ງຂອງປະເທດ. ສຳລັບເລື່ອງທີ 1 ກ່ຽວກັບເປົ້າໝາຍຂະຫຍາຍການສຶກສານັ້ນ ທາງການຂອງປະເທດນີ້ໄດ້ວາງແຜນພັດທະນາໃຫ້ເຕີບໂຕຂຶ້ນ 2 ເທົ່າຕົວພາຍໃນ 10 ປີຂ້າງໜ້າ. ນັບແຕ່ປີ 2023 ເປັນຕົ້ນມາ ຈຳນວນນັກສຶກສາຕ່າງປະເທດທີ່ເລືອກໄປຮຽນຢູ່ມະຫາວິທະຍາໄລ ກໍຄືສະຖາບັນການສຶກສາຂັ້ນສູງຂອງນູແວນເຊລັງນັ້ນ ໄດ້ເພີ່ມຂຶ້ນແບບກະໂດດຂັ້ນ. ສະຖິຕິໃນປັດຈຸບັນຊີ້ບອກວ່າຕະຫຼາດການສຶກສາຂອງປະເທດນີ້ມີສ່ວນແບ່ງມູນຄ່າເສດຖະກິດສູງເຖິງ 3.6 ຕື້ໂດລາ ນູແວນເຊລັງ ແລະ ພາຍໃນ 10 ປີຂ້າງໜ້າ ຕົວເລກນີ້ກໍຈະເພີ່ມຂຶ້ນເປັນກວ່າ 7 ຕື້ໂດລາ. ໃນປີ 2024 ນີ້ນັກສຶກສາຕ່າງປະເທດທີ່ພວມສຶກສາຢູ່ນູແວນເຊລັງ ນັ້ນ ມີຈຳນວນທັງໝົດ 83,700 ຄົນ. ຕົວເລກນີ້ຈະເພີ່ມຂຶ້ນເປັນ 105,000 ຄົນ ໃນປີ 2027 ແລະ 119,000 ຄົນໃນປີ 2034. ທີ່ຄວນສັງເກດນຳກັນກໍຄືນູແວນເຊລັງ ໄດ້ສວຍໂອກາດຍາດເວລາໃນຄະນະບາງປະເທດທີ່ເຄີຍເປັນຕະຫຼາດການສຶກສາຂະໜາດໃຫຍ່ ໄດ້ອອກມາດຕະການຈຳກັດຈຳ ນວນນັກສຶກສາຕ່າງປະເທດຍ້ອນບັນຫາພາຍໃນ. ຕົວຢ່າງປະເທດອົດສະຕຣາລີ ໄດ້ອອກມາດຕະການຈຳກັດການນຳເຂົ້ານັກສຶກສາຕ່າງປະເທດ ດ້ວຍເຫດຜົນວ່າຈະເຮັດໃຫ້ການເຊົ່າທີ່ພັກ ຫຼື ລາຄາເຮືອນແພງຂຶ້ນ ຍ້ອນນັກສຶກສາຕ່າງປະເທດໄປເໝົາເອົາໝົດ. ນອກນັ້ນ, ກໍຍັງມີບັນຫາອື່ນໆ ທີ່ສົ່ງຜົນກະທົບຕໍ່ນັກສຶກສາອົດສະຕຣາລີເອງ. ສ່ວນຢູ່ສະຫະລັດອາເມລິກາ ກໍຄືບາງປະເທດໃນເອີລົບນັ້ນ ກໍໄດ້ມີມາດຕະການຈຳກັດນັກສຶກສາຕ່າງປະເທດດ້ວຍຮູບການຕ່າງໆ. ການເປີດກວ້າງຕະຫຼາດການສຶກສາຂອງນູແວນເຊລັງຍັງມີແນວຄິດແຖມອີກຄືທາງການໄດ້ວາງແຜນເພີ່ມຈຳນວນຊົ່ວໂມງເຮັດວຽກນອກໂມງຮຽນ ສຳລັບນັກສຶກສາຕ່າງປະເທດ ໂດຍສະເພາະຈະມີການກຳນົດປະເພດ ແລະ ເງື່ອນໄຂຂອງນັກສຶກສາທີ່ຈະໄດ້ສິດເຮັດວຽກຫາເງິນເພີ່ມ ແລະ ທັງເປັນການປະກອບສ່ວນເຮັດໃຫ້ຕະຫຼາດແຮງງານປະເທດເຈົ້າພາບມີຄວາມໝັ້ນຄົງຂຶ້ນຕື່ມ.

ຂໍປິດທ້າຍບົດນີ້ ດ້ວຍຂ່າວດີທີ 2 ທີ່ບອກວ່າທາງການຂອງນູແວນເຊລັງ ໄດ້ວາງແຜນເກັບຄ່າເຂົ້າຊົມສະຖານທີ່ສຳຄັນ 4 ແຫ່ງຈາກນັກທ່ອງທ່ຽວຕ່າງປະເທດສູງເຖິງ40 ໂດລານູແວນເຊລັງ (ເທົ່າກັບ 24 ໂດລາສະຫະລັດ) ເປົ້າໝາຍຂອງການເກັບຄ່າເຂົ້າຊົມອ່າວແພງ ແມ່ນເພື່ອສ້າງລາຍຮັບເພີ່ມຂຶ້ນ ເຊິ່ງຄາດວ່າຈະໄດ້ເຖິງ 62 ລ້ານໂດລານູແວນເຊລັງ ຕໍ່ປີ ແລະ ເງິນຈຳນວນນີ້ຈະນຳໃຊ້ພັດທະນາແຫຼ່ງທ່ອງທ່ຽວສຳຄັນນັ້ນເອງ; ເປົ້າໝາຍທີສອງກໍເພື່ອຫຼຸດຜ່ອນສະພາບແອອັດໃນແຫຼ່ງທ່ອງທ່ຽວຍອດນິຍົມ 4 ແຫ່ງ ໂດຍມີການຄາດວ່າເມື່ອເກັບຄ່າເຂົ້າຊົມແພງ ກໍຈະເຮັດໃຫ້ນັກທ່ອງທ່ຽວຈຳນວນໜຶ່ງບໍ່ກ້າຈັກຖົງຈ່າຍ. ສະຖານທີ່ທ່ອງທ່ຽວ 4 ແຫ່ງ ທີ່ຈະເກັບຄ່າເຂົ້າຊົມແພງຂຶ້ນນັ້ນໄດ້ແກ່: ມິນຟອດແຫຼກ, ແຄທີໂດູນຄົບ, ຕົງກາຣີໂຣຄອດຊິງ ແລະ ພູຊຸກ (Mount Cook).

ຕາມພາສາ ກາຕູນ



ມົນລະພິດທາງສຽງ ຈາກເຮືອນຂ້າງ ສົ່ງສັບກັບເພື່ອນບ້ານວັນ

● ໂດຍ : ພູຜາ



# ຄວາມສາມາດ

*#ບ່າວກະບື*

ນາຍຈ້າງຕັ້ງຄຳຖາມກັບຜູ້ສະໝັກງານວ່າ:

“ອ້າຍບ່າວ, ຄິດຢູ່ບໍ່ວ່າ ເຈົ້າຊິເຮັດວຽກຫຼາຍລະບົດຫຼ້ອນ?”

ຜູ້ສະໝັກງານຕອບວ່າ:

“ຂ້ານ້ອຍໝັ້ນໃຈຮ້ອຍເປີເຊັນວ່າຈະເຮັດຫຼ້ອນ, ເພາະໃນສີ່ເດືອນຜ່ານມານີ້ ຂ້ານ້ອຍເຄີຍປ່ຽນວຽກເຮັດນັບສິບເທື່ອໃນລະແໜງຕ່າງໆມາແລ້ວ”

# Capacity

*#BAOKBU*

An employer asks a job applicant:

“Young man, do you think you can handle a variety of work?”

The job applicant replies:

“I'm 100% sure because in the past four months I've had ten different jobs.”



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານໃນຄະນະຮັບຜິດຊອບຄົ້ນຄວ້າແລະຮຽບຮຽງປະຫວັດຂອງສະພາແຫ່ງຊາດ ແລະ ກອງເລຂາຄະນະດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ມີຄຳເຫັນວ່າ: ຈຸດປະສົງ ແລະ ເນື້ອໃນຕົ້ນຕໍຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອລະດົມຄວາມຄິດ ແລະ ສຸມສະຕິປັນຍາ ເຂົ້າໃສ່ໃນການຄົ້ນຄວ້າ, ແລກປ່ຽນຂໍ້ມູນດ້ານປະຫວັດສາດ, ຄວາມເປັນມາ ຈາກບັນດາທ່ານທີ່ມີຄວາມຮູ້, ບົດຮຽນ ແລະປະສົບການ ເພື່ອຮຽບຮຽງຮ່າງປຶ້ມປະຫວັດສະພາແຫ່ງຊາດ 50 ປີ ໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງກັບສະພາບການເຄື່ອນໄຫວຕົວຈິງຂອງສະພາແຫ່ງຊາດ ໃນໄລຍະ 50 ປີທີ່ຜ່ານມາ ພ້ອມກັນນັ້ນ, ໃນໄລຍະນີ້ ສະພາແຫ່ງຊາດ ກຳລັງທວນຄືນມູນເຊື້ອ 50 ປີ ຂອງສະພາແຫ່ງຊາດ ໃນນີ້, ໄດ້ຄົ້ນຄວ້າແລະຮຽບຮຽງປະຫວັດສະພາແຫ່ງຊາດ 50 ປີ ແລະ ປຶ້ມ 50 ປີ ສາຍພົວພັນມິດຕະພາບລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ກັບ ສະພາແຫ່ງຊາດແຫ່ງສສ.ຫວຽດນາມ; ຄົ້ນຄວ້າສັງລວມປະມວນເອກະສານທີ່ສຳຄັນຕ່າງໆ ຂອງສະພາແຫ່ງຊາດ ປະມານ 9-10 ປະມວນ ແນໃສ່ສ້າງຜົນງານເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະການສະເຫຼີມສະຫຼອງວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 50 ປີ (2 ທັນວາ 1975-2 ທັນວາ 2025), ວັນສ້າງຕັ້ງພັກ ຄົບຮອບ 70 ປີ (22 ມີນາ 1955-22 ມີນາ 2025), ວັນສະຖາປະນາ ສປປລາວ ຄົບຮອບ 50 ປີ (2 ທັນວາ 1975-ທັນວາ 2025) ແລະ ວັນເກີດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ຄົບຮອບ 105 (13 ທັນວາ 1920-13 ທັນວາ 2025).

ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ວິເຄາະ, ວິໄຈ, ປະກອບຄຳເຫັນຢ່າງລະອຽດ, ເລິກເຊິ່ງຕໍ່ການຂຽນຮ່າງປຶ້ມປະຫວັດຂອງສະພາແຫ່ງຊາດ 50 ປີເພື່ອໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ແນໃສ່ໃຫ້ສຳເລັດຮ່າງປຶ້ມໂດຍພື້ນຖານ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ຈັດພິມແຈກຢາຍໃຫ້ທັນຕາມກຳນົດເວລາ.

**(ສອນສັກ ວັນວິໄຊ)**

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ